

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຜົນການດຳເນີນທຸລະກິດ ປະຈຳໄຕມາດ 3 ປີ 2026

ສຳລັບສາມເດືອນ ສິ້ນສຸດວັນທີ 30 ກັນຍາ 2026

+856 21 316142
www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-GENERATION PUBLIC COMPANY

ນະໂຍບາຍຄຸນນະພາບ ຂອງ ຜ-ຟຟລ / QUALITY POLICY

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຈະເປັນບໍລິສັດທີ່ຕັ້ງໜ້າ:

01



ເປັນບໍລິສັດນຳໜ້າໃນ ສປປ ລາວ ໃນການດຳເນີນທຸລະກິດຜະລິດໄຟຟ້າ ເພື່ອຮັບໃຊ້ພາຍໃນປະເທດ ແລະ ປະກອບສ່ວນເຮັດໃຫ້ປະເທດ ກາຍເປັນແຫຼ່ງຜະລິດພະລັງງານໄຟຟ້າແຫ່ງໜຶ່ງໃຫ້ແກ່ຂົງເຂດພາກພື້ນອາຊຽນ;

02

ຮັບປະກັນການສະໜອງໄຟຟ້າພາຍໃນປະເທດໃຫ້ພຽງພໍຢ່າງມີສະຖຽນລະພາບ ແລະ ສົ່ງອອກຂາຍໄຟຟ້າໃຫ້ບັນດາກຸ່ມປະເທດອາຊຽນ ດ້ວຍລາຄາທີ່ສົມເຫດສົມຜົນ;

03

ພັດທະນາ ແລະ ຜະລິດພະລັງງານໄຟຟ້າແບບຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ;

04

ຕອບສະໜອງຄວາມຕ້ອງການຂອງລູກຄ້າ ແລະ ການບໍລິການດ້ວຍຄວາມພຶງພໍໃຈ;

05

ປະຕິບັດຕາມກົດລະບຽບ, ຂໍ້ກຳນົດ ແລະ ກົດໝາຍ ຂອງ ສປປ ລາວ;

06

ISO

ປະຕິບັດຕາມເງື່ອນໄຂຂໍ້ກຳນົດຂອງ ມາດຕະຖານສາກົນ ISO 9001:2015 QMS;

07

ປັບປຸງລະບົບການບໍລິຫານຄຸນນະພາບ ໃຫ້ມີປະສິດທິຜົນຢ່າງຕໍ່ເນື່ອງ.

ສາລະບານ

ພາກທີ **ໜ້າທີ**

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ

1. ວິໄສທັດ, ພາລະກິດ ແລະ ເປົ້າໝາຍຫຼັກໃນການດຳເນີນທຸລະກິດ 4
2. ເຫດການພົ້ນເດັ່ນ 5

II. ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ

1. ໂຄງຮ່າງການຈັດຕັ້ງ 7
2. ຂໍ້ມູນ ແລະ ປະຫວັດຫຍໍ້ຂອງ ຄະນະສະພາບໍລິຫານ.....8
3. ຂໍ້ມູນ ແລະ ປະຫວັດຫຍໍ້ຂອງ ຄະນະຜູ້ອຳນວຍການໃຫຍ່ 8

III. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ

1. ກອງປະຊຸມສະພາບໍລິຫານ.....20
2. ຄະນະກຳມະການ ທີ່ຂຶ້ນກັບສະພາບໍລິຫານ.....20
   2.1 ຄະນະກຳມະການຄຸ້ມຄອງບໍລິຫານ 20
   2.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ.....21
   2.3 ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ 21
   2.4 ຄະນະກຳມະການກວດສອບ 22
3. ຄະນະກຳມະການ ທີ່ຂຶ້ນກັບຜູ້ອຳນວຍການໃຫຍ່ 23
   3.1 ຄະນະກຳມະການຈັດຊື້-ຈັດຈ້າງ.....23
   3.2 ຄະນະກຳມະການສະສາງອັດຖຸອຸປະກອນ 23
   3.3 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ 23

IV. ວຽກງານການເຄື່ອນໄຫວດ້ານສິ່ງແວດລ້ອມ ແລະ ຊຸມຊົນ

1. ນະໂຍບາຍດ້ານສິ່ງແວດລ້ອມ ແລະ ຊຸມຊົນ.....24
2. ວຽກງານທີ່ຕິດພັນກັບສິ່ງແວດລ້ອມ ແລະ ຊຸມຊົນ 25

V. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ

1. ການຜະລິດ.....26
2. ລາຍຮັບ 27
3. ລາຍຈ່າຍ.....27
4. ກຳໄລ/(ຂາດທຶນ) ສຸດທິໃນການດຳເນີນທຸລະກິດ.....28
5. ການມອບພັນທະໃຫ້ລັດ.....29
6. ການຊື້-ຂາຍຮຸ້ນ ຂອງ ຜ-ຟຟລ ຢູ່ໃນຕະຫຼາດຫຼັກຊັບ.....30

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ

1. ວິໄສທັດ, ພາລະກິດ ແລະ ເປົ້າໝາຍຫຼັກໃນການດຳເນີນທຸລະກິດ

❖ ວິໄສທັດ

1. ເປັນບໍລິສັດນຳໜ້າ ຂອງ ສປປ ລາວ ໃນການຜະລິດພະລັງງານໄຟຟ້າ ທີ່ໝັ້ນຄົງ ເພື່ອຕອບສະໜອງໃນການພັດທະນາ ເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ຂອງພູມິພາກຕາມທິດ ສີຂຽວ ແລະ ຍືນຍົງ.
2. ເປັນບໍລິສັດນຳໜ້າໃນການ ໃຫ້ບໍລິການຄຸ້ມຄອງ ແລະ ບຳລຸງຮັກສາ ໂຮງງານຜະລິດໄຟຟ້າໃນ ສປປ ລາວ ແລະ ໃນພູມິພາກ.
3. ເປັນບໍລິສັດນຳໜ້າ ທີ່ ສ້າງມູນຄ່າເພີ່ມໃຫ້ແກ່ຜູ້ຖືຮຸ້ນ.

❖ ພາລະກິດ

1. ສະໜອງໄຟຟ້າ ດ້ວຍແຫຼ່ງພະລັງງານສະອາດ ແລະ ພະລັງງານທົດແທນ ໂດຍຄຳນຶງເຖິງສິ່ງແວດລ້ອມ ເພື່ອສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານໃຫ້ແກ່ປະເທດ ແລະ ພູມິພາກ.
2. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ຈະແຈ້ງ, ໂປ່ງໃສ ແລະ ກວດສອບໄດ້.
3. ສົມທົບຢ່າງສະໜິດແໜ້ນ ກັບ ຄູ່ຮ່ວມຍຸດທະສາດ ແລະ ບໍລິສັດຈຳໜ່າຍພະລັງງານໄຟຟ້າໃນການສະໜອງພະລັງງານໄຟຟ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ພາຍໃນປະເທດ ແລະ ພູມິພາກ.
4. ຕັ້ງໜ້າຍົກສູງປະສິດທິພາບ ແລະ ພັດທະນາບໍລິສັດໃນທຸກດ້ານ ເພື່ອໃຫ້ກາຍເປັນທັງຜູ້ຜະລິດ ແລະ ໃຫ້ບໍລິການຄຸ້ມຄອງ-ບຳລຸງຮັກສາ ໂຮງງານຜະລິດໄຟຟ້າ ໃນ ສປປ ລາວ ແລະ ພູມິພາກ.
5. ລົງທຶນໃນທຸລະກິດທີ່ເນັ້ນໃສ່ການສ້າງມູນຄ່າເພີ່ມ ທັງໄລຍະສັ້ນ ແລະ ໃນໄລຍະຍາວ ເພື່ອໃຫ້ໄດ້ຮັບຜົນຕອບແທນ ທີ່ສູງສຸດ ຢ່າງຕໍ່ເນື່ອງໃຫ້ແກ່ຜູ້ຖືຮຸ້ນ.

❖ ເປົ້າໝາຍຫຼັກໃນການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ບໍລິສັດ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າ ຖ້າຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນ ທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນແຜນໄວ້ແລ້ວ ຫຼື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫຼື ບາງສ່ວນແທນ ຟຟລ ໃນບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດ (Independent Power Producer: IPP);
3. ຮັບເໝົາບໍລິການ ການເດີນເຄື່ອງ ແລະ ບຳລຸງຮັກສາ (Operation & Maintenance Service) ໃຫ້ແກ່ບັນດາໂຄງການຜະລິດໄຟຟ້າຕ່າງໆ ໃນຂອບເຂດທົ່ວປະເທດ.

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ

2. ເຫດການພົ້ນເດັ່ນ

ກໍລະກົດ

- **ວັນທີ 09 ກໍລະກົດ 2026**

  ຜ-ຟຟລ ໄດ້ເອົາໃຈໃສ່ ຕໍ່ວຽກງານ ສິ່ງແວດລ້ອມ ແລະ ສັງຄົມ ໂດຍລົງປະຕິບັດວຽກງານພາກສະໜາມໃນການກວດກາຄຸນນະພາບນ້ຳ ແລະ ເກັບກຳຂໍ້ມູນ ຮ່ວມກັບ ບໍລິສັດທີ່ປຶກສາ ແອວໄອດີອີໄອເອ ຈຳກັດຜູ້ດຽວ ຢູ່ບັນດາເຂື່ອນໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງ ເປັນຕົ້ນແມ່ນ ເຂື່ອນໄຟຟ້ານ້ຳຄານ 2-3, ນ້ຳສະນຳ, ນ້ຳມັງ 3, ຫ້ວຍລຳພັນໃຫຍ່, ເຊເສັດ 1-2, ເຊເສັດ 3, ແຊລະບຳ ແລະ ນ້ຳເລີກ ເພື່ອຮັບປະກັນການດຳເນີນທຸລະກິດຜະລິດພະລັງງານໄຟຟ້າໃຫ້ມີຄວາມຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ.

- **ວັນທີ 23-24 ກໍລະກົດ 2026**

  ຜ-ຟຟລ ໄດ້ຈັດກິດຈະກຳອາສາສະໝັກ ເພື່ອລົງພື້ນທີ່ສ້ອມແປງອາຄານໂຮງຮຽນ ໄດ້ຮັບຜົນກະທົບຈາກລົມພາຍຸ ແລະ ໝາກເຫັບຕົກໃສ່ ໃຫ້ແກ່ນ້ອງນັກຮຽນຢູ່ບ້ານວັງເຮືອ ແລະ ບ້ານປ່າແປກ ເຊິ່ງເປັນບ້ານທີ່ຕັ້ງຢູ່ເທິງ ປ່າສະຫງວນແຫ່ງຊາດ ພູເຂົາຄວາຍ ເມືອງ ທຸລະຄົມ ແຂວງ ວຽງຈັນ ແລະ ເປັນບ້ານທີ່ຕັ້ງຢູ່ເຂດອ້ອມຂ້າງເຂື່ອນໄຟຟ້ານ້ຳມັງ 3.

ສິງຫາ

- **ວັນທີ 05 ສິງຫາ 2026**

  ຜ-ຟຟລ ໄດ້ຈັດກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານ 06 ເດືອນຕົ້ນປີ 2026 ເພື່ອຕີລາຄາຄືນໝາກຜົນຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະ 6 ເດືອນຜ່ານມາ, ປຶກສາຫາລືກ່ຽວກັບແຜນວຽກ Action Plan ທີ່ສຳຄັນເພື່ອສືບຕໍ່ຈັດຕັ້ງປະຕິບັດໃນໄລຍະທ້າຍປີ ແລະ ພິຈາລະນາແກ້ໄຂບັນຫາທີ່ຍັງຄ້າງ ແລະ ຂໍ້ສະເໜີຕ່າງໆ ເພື່ອເພີ່ມປະສິດທິພາບໃນການດຳເນີນງານ.

- **ວັນທີ 11 ສິງຫາ 2026**

  ຜ-ຟຟລ ໄດ້ສຳເລັດການລະດົມທຶນ ຜ່ານການອອກຮຸ້ນກູ້ ສະກຸນເງິນໂດລາສະຫະລັດ ມູນຄ່າ 300 ລ້ານໂດລາສະຫະລັດ ທີ່ ຕະຫຼາດຫຼັກຊັບປະເທດສິງກະໂປ.

- **ວັນທີ 21 ສິງຫາ 2026**

  ຜ-ຟຟລ ໄດ້ເຜີຍແຜ່ຂໍ້ມູນສະຖານະການຂອງເຂື່ອນ ແລະ ລະດັບນ້ຳໃຫ້ສັງຄົມຮັບຮູ້ຢ່າງຕໍ່ເນື່ອງ. ເຊິ່ງໄດ້ມີການຕິດຕາມ, ເພີ່ມຄວາມເຂັ້ມງວດ ໃນການບໍລິຫານຈັດການນ້ຳຂອງເຂື່ອນໄຟຟ້ານ້ຳຄານ 2 - ນ້ຳຄານ 3 ໃນລະດູຝົນຢ່າງໃກ້ຊິດ, ເພື່ນຄວາມປອດໄພ ແລະ ການສື່ສານຂໍ້ມູນຢ່າງໂປ່ງໃສ ໂດຍອີງໃສ່ຂໍ້ມູນອຸທົກວິທະຍາ ແລະ ສະພາບອາກາດ.

  ຜ-ຟຟລ ຍັງໄດ້ຮ່ວມກັບ ກົມພະລັງງານ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ຜູ້ຊ່ຽວຊານສາກົນ ໃນການລົງສຳຫຼວດການກຽມຄວາມພ້ອມດ້ານຄວາມປອດໄພຊຸມຊົນທ້າຍເຂື່ອນ ເພື່ອປະເມີນວ່າ ປະຊາຊົນໃນເຂດທ້າຍເຂື່ອນສາມາດ ເຂົ້າເຖິງ, ຮັບຮູ້ ແລະ ເຂົ້າໃຈຂໍ້ມູນເຕືອນໄພລ່ວງໜ້າ ໄດ້ຫຼາຍປານໃດ ພ້ອມທັງທົບທວນວິທີການແຈ້ງຂ່າວ ແລະ ການສື່ສານໃນສະຖານະການສຸກເສີນ ການຍົກຍ້າຍ ສິ່ງຂອງຊັບສິນ, ຜູ້ເຖົ້າ, ເດັກນ້ອຍ, ສັດ ແລະ ອື່ນໆ ແນວໃດໃນສະຖານະການນ້ຳຖ້ວມ.

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ

2. ເຫດການພົ້ນເດັ່ນ (ຕໍ່)

ສິງຫາ

- **ວັນທີ 27 ສິງຫາ 2026**
  ຜ-ຟຟລ ໄດ້ແຈ້ງມະຕິສຳຄັນຂອງການຕົກລົງເຫັນດີ ຂອງສະພາບໍລິຫານ ໃຫ້ ອະນຸມັດ ການແຕ່ງຕັ້ງ ທ່ານ ດາວວຽງ ສຸນັນທະລາດ ເປັນຮັກສາການຜູ້ ອຳນວຍການໃຫຍ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນຜູ້ອຳນວຍການ ໃຫຍ່ຜູ້ເກົ່າ ທີ່ໄປຮັບໜ້າທີ່ໃໝ່.

ກັນຍາ


- **ວັນທີ 01 ກັນຍາ 2026**
  ຜ-ຟຟລ ໄດ້ສຳເລັດ ການມອບ-ຮັບ ວຽກກໍ່ສ້າງຕາຂ່າຍໄຟຟ້າແຮງດັນກາງ 22 (kV) ຕາມເສັ້ນທາງ 516 ຄວາມຍາວ 5,9 ກິໂລແມັດ ຢູ່ເມືອງ ລ້ອງຊານ, ແຂວງ ໄຊສົມບູນ ຢ່າງເປັນທາງການ. ເຊິ່ງວຽກງານດັ່ງກ່າວ ມີສຳຄັນຢ່າງຍິ່ງ ໃນການ ເພີ່ມປະສິດທິພາບ ແລະ ຄວາມໝັ້ນຄົງ ການຈ່າຍກະແສໄຟຟ້າ ເພື່ອສະໜອງ ພະລັງງານໄຟຟ້າ ໃຫ້ແກ່ປະຊາຊົນໃນຂົງເຂດດັ່ງກ່າວຢ່າງພຽງພໍ, ທັງເປັນການ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ ແລະ ປັບປຸງຊີວິດຄວາມເປັນຢູ່ ຂອງປະຊາຊົນ ໃນເມືອງ ລ້ອງຊານ ແຂວງ ໄຊສົມບູນ ໃຫ້ດີຂຶ້ນເລື້ອຍໆ.
- **ວັນທີ 02 ກັນຍາ 2026**
  ຜ-ຟຟລ ແລະ ຄະນະຊ່ຽວຊານສາກົນຈາກໂຄງການ Dam Safety Technical and Institutional Assistance (DSTIA) ໄດ້ຮ່ວມມືກັນ ດຳເນີນພາລະກິດລົງພື້ນທີ່ສຳຫຼວດຊຸມຊົນທ້າຍເຂື່ອນໄຟຟ້ານ້ຳງື່ມ 1 ເພື່ອ ປະເມີນຄວາມພ້ອມຂອງຊຸມຊົນ ແລະ ກົນໄກການຮັບຮູ້ຂໍ້ມູນແຈ້ງເຕືອນລ່ວງໜ້າ ລວມເຖິງການທົບທວນມາດຕະການກຽມພ້ອມຮັບມືໄພພິບັດ ຂັ້ນບ້ານ.
- **ວັນທີ 07 - 08 ກັນຍາ 2026**
  ຜ-ຟຟລ ໄດ້ຈັດການຝຶກອົບຮົມພາຍໃຕ້ ຫົວຂໍ້ “ISO 9001:2026 DIS / Update Key Change Point ແລະ ການກວດປະເມີນລະບົບບໍລິຫານ ຄຸນນະພາບພາຍໃນ” ຂຶ້ນຢ່າງເປັນທາງການ ເພື່ອເປັນການສ້າງການເຂັ້ມແຂງ ທາງດ້ານທັກສະຄວາມຮູ້ ໃຫ້ແກ່ ພະນັກງານວິຊາການ ຂອງ ຜ-ຟຟລ.
- **ວັນທີ 18 ກັນຍາ 2026**
  ຜ-ຟຟລ ໄດ້ມອບ ອຸປະກອນ ຄອມພິວເຕີ ແລະ ອຸປະກອນສ້ອມແປງລະບົບໄຟຟ້າ ໃຫ້ແກ່ໂຮງຮຽນມັດທະຍົມຕອນຕົ້ນ ສີສັດຕະນາກ, ທີ່ບ້ານ ທົ່ງກາງ, ເມືອງ ສີສັດ ຕະນາກ, ນະຄອນຫຼວງວຽງຈັນ ເພື່ອປ່ຽນແທນລະບົບໄຟຟ້າເກົ່າທີ່ຊຳລຸດຊຸດໂຊມ, ພ້ອມທັງ ເປັນການສ້າງສະພາບແວດລ້ອມການຮຽນ-ການສອນທີ່ດີ, ອຳນວຍ ຄວາມສະດວກໃຫ້ແກ່ ນັກຮຽນ ແລະ ຄູ-ອາຈານ ພາຍໃນໂຮງຮຽນ.
- **ວັນທີ 19 ກັນຍາ 2026**
  ຜ-ຟຟລ ໄດ້ຈັດກິດຈະກຳປູກຈິດສຳນຶກດ້ານສິ່ງແວດລ້ອມ ໃຫ້ແກ່ນ້ອງນັກຮຽນ ທີ່ໂຮງຮຽນບ້ານວັງເຮືອ, ເມືອງທຸລະຄົມ, ແຂວງວຽງຈັນ ເຊິ່ງເປັນໂຮງຮຽນທີ່ຕັ້ງ ຢູ່ໃນຂອບເຂດອ້ອມຂ້າງເຂື່ອນໄຟຟ້ານ້ຳມັງ 3.
- **ວັນທີ 22 ກັນຍາ 2026**
  ຜ-ຟຟລ ໄດ້ເຂົ້າຮ່ວມງານສຳມະນາ “ບໍລິສັດຈົດທະບຽນພົບປະຜູ້ລົງທຶນ” (Opportunity Day) ເຊິ່ງຈັດຂຶ້ນໂດຍ ຕະຫຼາດຫຼັກຊັບລາວ (ຕລຊລ).

II. ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ

1. ໂຄງຮ່າງການຈັດຕັ້ງ

ຮອດວັນທີ 30 ກັນຍາ 2026 ໂຄງຮ່າງການຈັດຕັ້ງ ຜ-ຟຟລ ປະກອບດ້ວຍ ສະພາບໍລິຫານ 07 ທ່ານ (ໃນນີ້ຄະນະກຳມະການອິດສະຫຼະມີ 02 ທ່ານ), ຄະນະຜູ້ອຳນວຍການໃຫຍ່ 04 ທ່ານ, ມີ 09 ຝ່າຍ, 30 ພະແນກ ແລະ 10 ເຂື່ອນ. ລວມມີຈຳນວນພົນ ຂອງ ຜ-ຟຟລ ແລະ ບໍລິສັດໃນເຄືອ ມີທັງໝົດ 825 ຄົນ, ໃນນີ້ຍິງມີ 163 ຄົນ.

ໂຄງຮ່າງການຈັດຕັ້ງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



II. ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ

2. ຂໍ້ມູນ ແລະ ປະຫວັດຫຍໍ້ ຂອງຄະນະສະພາບໍລິຫານ ແລະ ຄະນະຜູ້ອຳນວຍການໃຫຍ່

2.1 ຄະນະສະພາບໍລິຫານ

ຄະນະສະພາບໍລິຫານ ຂອງ ຜ-ຟຟລ ມາຮອດວັນທີ 30 ກັນຍາ 2026 ປະກອບມີທັງໝົດ 07 ທ່ານ ດັ່ງນີ້:

ຄະນະສະພາບໍລິຫານ ຜ-ຟຟລ		
ຊື່ ແລະ ນາມສະກຸນ	**ຕຳແໜ່ງ**	**ວັນທີຮັບຮອງ**
ທ່ານ ສຸລິວັດ ສຸວັນນະຈຸມຄຳ	ປະທານສະພາບໍລິຫານ	31 ມີນາ 2025
ທ່ານ ປອ. ອາຄົມເດດ ວົງໄຊ	ຮອງປະທານສະພາບໍລິຫານ	31 ມີນາ 2025
ທ່ານ ວິເລດ ກົມນາວົງ	ກຳມະການສະພາບໍລິຫານ	31 ມີນາ 2025
ທ່ານ ສຸກສະຫວາດ ໂສສຸພັນ	ກຳມະການສະພາບໍລິຫານ	31 ມີນາ 2025
ທ່ານ ຊົນລະວິດ ວິນິດໄສ	ກຳມະການສະພາບໍລິຫານ	29 ເມສາ 2026
ທ່ານ ສຈ.ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫຼະ	31 ມີນາ 2025
ທ່ານ ພັນປານີ ສິດທິລາດ	ກຳມະການອິດສະຫຼະ	31 ມີນາ 2025

2.2 ຄະນະຜູ້ອຳນວຍການໃຫຍ່

ຄະນະຜູ້ອຳນວຍການໃຫຍ່ ຂອງ ຜ-ຟຟລ ມາຮອດວັນທີ 30 ກັນຍາ 2026 ປະກອບມີທັງໝົດ 04 ທ່ານ ດັ່ງນີ້:

ຄະນະຜູ້ອຳນວຍການໃຫຍ່ ຜ-ຟຟລ		
ຊື່ ແລະ ນາມສະກຸນ	**ຕຳແໜ່ງ**	**ວັນທີຮັບຮອງ**
ທ່ານ ດາວວຽງ ສຸນັນທະລາດ	ຮັກສາການ ຜູ້ອຳນວຍການໃຫຍ່	27 ສິງຫາ 2026
ທ່ານ ຄຳໃບ ຫລວງໄຊ	ຮອງຜູ້ອຳນວຍການໃຫຍ່	31 ມີນາ 2025
ທ່ານ ນາງ ໂພຄົນ ອັບໄພ	ຮອງຜູ້ອຳນວຍການໃຫຍ່	31 ມີນາ 2025
ທ່ານ ສີລິພົມ ແສງອ່ອນແກ້ວ	ຮອງຜູ້ອຳນວຍການໃຫຍ່	31 ມີນາ 2025

ໝາຍເຫດ:

- ສະພາບໍລິຫານ ຜ-ຟຟລ ໄດ້ມີມະຕິຕົກລົງເຫັນດີ ອະນຸມັດແຕ່ງຕັ້ງ **ທ່ານ ດາວວຽງ ສຸນັນທະລາດ** ເປັນ ຮັກສາການ ຜູ້ອຳນວຍການໃຫຍ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນ **ທ່ານ ສຸກສະຫວາດ ໂສສຸພັນ** ທີ່ໄປຮັບໜ້າທີ່ໃໝ່. ພ້ອມດຽວກັນນີ້, ໃຫ້ນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງຕາມລະບຽບການທີ່ກ່ຽວຂ້ອງ.

ທ່ານ ສຸລິວັດ ສຸວັນມະຈູມຄຳ
ປະທານສະພາບໍລິຫານ



ວັນ/ເດືອນ/ປີເກີດ: 30/10/1977
ອາຍຸ: 49 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ໂພນສະຫວັນໃຕ້, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ດ້ານວິຊາພົວພັນຕ່າງປະເທດດ້ານເສດຖະກິດ ແລະ ການເມືອງ, ມະຫາວິທະຍາໄລ LODZ, ປະເທດໂປໂລຍ.
ດ້ານພາສາຕ່າງປະເທດ: ພາສາອັງກິດ, ພາສາໂປໂລຍ ແລະ ພາສາໄທ

ຄະນະສະພາບໍລິຫານ

ຝຶກອົບຮົມ:

- 2019 ຮຽນທິດສະດີການເມືອງການປົກຄອງຂັ້ນສູງ ທີ່ ສະຖາບັນການເມືອງການປົກຄອງແຫ່ງຊາດ.

ປະສົບການ:

- 2002-2004 ວິຊາການຮັບຜິດຊອບດ້ານການຮ່ວມມືສະຖາບັນການເງິນສາກົນ (IFIs), ພະແນກຮ່ວມມືສາກົນ, ກົມການເງິນຕ່າງປະເທດ, ກະຊວງການເງິນ.
- 2004-2007 ເຈົ້າໜ້າທີ່ອາວຸໂສຮັບຜິດຊອບວຽກງານຄຸ້ມຄອງໜີ້ສິນສາທາລະນະ, ກົມການເງິນຕ່າງປະເທດ, ກະຊວງການເງິນ.
- 2007-2009 ເຈົ້າໜ້າທີ່ອາວຸໂສ, ເລຂາຮອງລັດຖະມົນຕີກະຊວງການເງິນ.
- 2009-2011 ຮອງຫົວໜ້າພະແນກ, ເລຂາຮອງລັດຖະມົນຕີກະຊວງການເງິນ.
- 2011-2013 ປະຈຳການເປັນທີ່ປຶກສາ ຫົວໜ້າຫ້ອງການຜູ້ຕາງໜ້າກຸ່ມອາຊີຕາເວັນອອກສຽງໃຕ້ ຢູ່ສຳນັກງານໃຫຍ່ທະນາຄານໂລກ, ວໍຊິງຕັນ ດີຊີ, ສະຫະລັດ ອາເມລິກາ.
- 2013-2014 ຫົວໜ້າພະແນກເສດຖະກິດມະຫາພາກ, ກົມນະໂຍບາຍການເງິນ, ກະຊວງການເງິນ.
- 2014-2016 ຮອງຫົວໜ້າກົມ, ເລຂາຮອງນາຍົກລັດຖະມົນຕີ, ສຳນັກງານນາຍົກລັດຖະມົນຕີ.
- 2016-2018 ຮອງຫົວໜ້າກົມງົບປະມານ, ກະຊວງການເງິນ.
- 2018-2019 ຮອງຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ.
- 2019-2021 ຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ.
- 01/2022-07/2024 ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ.
- 07-12/2024 ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.
- 12/2024 –ປັດຈຸບັນ ຮອງລັດຖະມົນຕີກະຊວງການເງິນ.



ທ່ານ ປອ ອາຄົມເດດ ວົງໄຊ
ຮອງປະທານສະພາບໍລິຫານ

ວັນ/ເດືອນ/ປີເກີດ : 27/04/1978
ອາຍຸ : 48 ປີ
ສັນຊາດ : ລາວ
ທີ່ຢູ່ປັດຈຸບັນ : ບ້ານ ໂພນປ່າເປົ້າ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາເອກສາຂາວິທະຍາສາດການບໍລິຫານ ພະລັງງານ, ຫຼັກສູດຮ່ວມລະຫວ່າງ ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລ ຄຸນມິງ, ປະເທດຈີນ.
ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາໄທ

ຄະນະສະພາບໍລິຫານ

ຝຶກອົບຮົມ:

- 2006 ພະລັງງານທົດແທນ ທີ່ປະເທດຍີ່ປຸ່ນ.
- 2007 ໂຮງໄຟຟ້າພະລັງງານນ້ຳຂະໜາດນ້ອຍ ທີ່ປະເທດອິນໂດເນເຊຍ.
- 2009 ເຂົ້າຮ່ວມງານສຳມະນາຄັ້ງທີ 2 ກ່ຽວກັບຖານຂໍ້ມູນນ້ຳມັນເຊື້ອໄຟຊີວະພາບໃນປະເທດອາຊີຕາເວັນອອກ ທີ່ປະເທດຍີ່ປຸ່ນ.
- 2009 ການນຳໃຊ້ ແລະ ບໍລິຫານນ້ຳ ທີ່ປະເທດສະວິເດັນ.
- 2010 ການພັດທະນາໂຮງໄຟຟ້າພະລັງງານນ້ຳຂະໜາດນ້ອຍ ທີ່ປະເທດຈີນ.
- 2010 ຝຶກອົບຮົມກ່ຽວກັບໂຮງໄຟຟ້າ ພະລັງງານນ້ຳຂະໜາດນ້ອຍສຳລັບປະເທດລຸ່ມພັດທະນາ ທີ່ປະເທດ ເນປານ.
- 2013 ຝຶກອົບຮົມກ່ຽວກັບຖານຂໍ້ມູນພະລັງງານ ແລະ ການວິເຄາະ ທີ່ປະເທດຝຣັ່ງ.
- 2013 ກອງປະຊຸມລັດຖະມົນຕີພະລັງງານອາຊຽນຄັ້ງທີ 32 ທີ່ ສປປ ລາວ ເປັນເຈົ້າພາບ.
- 2014 ຝຶກອົບຮົມດ້ານການເງິນໂຄງການເຂື່ອນໄຟຟ້າ ທີ່ປະເທດ ນໍເວ.
- 2015 ຝຶກອົບຮົມດ້ານການເງິນຂອງໂຄງການ ທີ່ ສະຫະລັດອາເມລິກາ.
- 2016 ຝຶກອົບຮົມດ້ານລະບົບພະລັງງານນ້ຳ ທີ່ປະເທດອົດສະຕາລີ.
- 2016 ທົດສະດີການເມືອງການປົກຄອງ 45 ວັນ ທີ່ ສະຖາບັນການເມືອງການປົກຄອງແຫ່ງຊາດ.
- 2018 ປະຊຸມ Hydro Asia 2018 conference ທີ່ປະເທດຫວຽດນາມ.
- 2019 ສຳມະນາກ່ຽວກັບ ເຂື່ອນ ແລະ ພະລັງງານນ້ຳ ທີ່ປະເທດ ປ໋ອກຕຸຍການ.
- 2019 ຮຽນທົດສະດີການເມືອງການປົກຄອງ 5 ເດືອນ ຂັ້ນສູງ ທີ່ ສະຖາບັນການເມືອງການປົກຄອງແຫ່ງຊາດ.

ປະສົບການ:

- 2004 – 2009 ວິຊາການ ພະແນກພັດທະນາກົມໄຟຟ້າ, ກະຊວງ ພະລັງງານ ແລະ ບໍ່ແຮ່ (ໃນເມື່ອກ່ອນ).
- 2009 – 2014 ຮອງຫົວໜ້າພະແນກບໍລິຫານສັງລວມ, ກົມນະໂຍບາຍ ແລະ ແຜນ ພະລັງງານ, ກະຊວງ ພະລັງງານ ແລະ ບໍ່ແຮ່.
- 2014 - 2018 ຫົວໜ້າພະແນກ ພັດທະນາໂຄງການ, ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່.
- 2018 - 2020 ຮອງຫົວໜ້າກົມ ທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່ .
- 2020 - 2024 ຫົວໜ້າກົມ ແຜນການ ແລະ ການຮ່ວມມື , ກະຊວງພະລັງງານ ແລະ ບໍ່ແຮ່.
- 10/2024 - 05/2026 ຜູ້ອຳນວຍການ ບໍລິສັດ ລັດວິສາຫະກິດໄຟຟ້າລາວ.
- 05/2026 - ປັດຈຸບັນ ຜູ້ຊ່ວຍລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ, ປະທານສະພາບໍລິຫານ ບໍລິສັດ ລັດວິສາຫະກິດໄຟຟ້າລາວ.



ທ່ານ ສຸກສະຫວາດ ໂສສຸພັນ

ກຳມະການສະພາບໍລິຫານ

ວັນ/ເດືອນ/ປີເກີດ: 20/03/1985
ອາຍຸ: 41 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ເມືອງນ້ອຍ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາວິຊາ ວິສະວະກຳ ພະລັງງານສິ່ງແວດລ້ອມ, ມະຫາວິທະຍາໄລໂອຊາກາ, ປະເທດຍີ່ປຸ່ນ
ດ້ານພາສາຕ່າງປະເທດ: ພາສາອັງກິດ, ພາສາຍີ່ປຸ່ນ ແລະ ພາສາໄທ

ຄະນະສະພາບໍລິຫານ

ຝຶກອົບຮົມ:

- 2015 ຕະຫຼາດໄຟຟ້າລະດັບພາກພື້ນ ແລະ ການເຊື່ອມຕໍ່ສາຍສົ່ງໄຟຟ້າຂ້າມຊາຍແດນ ທີ່ ມະຫາວິທະຍາໄລອິນຊອນ ສາທາລະນະລັດເກົາຫຼີ (ເກົາຫຼີໃຕ້).
- 2016 ທິດສະດີການເມືອງການປົກຄອງ 45 ວັນ ທີ່ ກະຊວງພະລັງງານ ແລະ ບໍ່ແຮ່.
- 2019 ການເຊື່ອມຕໍ່ລະບົບໄຟຟ້າ ຂອງໂຄງການຮ່ວມມືລ້ານຊ້າງ-ແມ່ນ້ຳຂອງ ທີ່ກວາງໂຈວ.
- 2023 ໂຄງການຝຶກອົບຮົມລະດັບສູງຂອງ IFC-Harvard ກ່ຽວກັບໂຄງການຮ່ວມທຶນ ລະຫວ່າງ ພາກລັດ-ເອກະຊົນ ແລະ ການເງິນ ພາຍໃຕ້ໂຄງການຮ່ວມມືຍີ່ປຸ່ນ-ສິງກະໂປ ສຳລັບສະຕະວັດທີ 21 (JSPP21) ທີ່ໂຮງຮຽນ Kennedy ມະຫາວິທະຍາໄລຮາວາດ.
- 2024 ທິດສະດີການເມືອງການປົກຄອງ ຂັ້ນສູງ (09 ເດືອນ) ທີ່ ສະຖາບັນການເມືອງການ ປົກຄອງແຫ່ງຊາດ.

ປະສົບການ:

- 2012 ຊ່ວຍວຽກ ຮ່ວມກັບ ທີ່ປຶກສາ JICA ໃນການພັດທະນາໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ.
- 2012-2018 ພະນັກງານພະແນກສັນຍາ, ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່.
- 2018-2020 ຮັກສາການຫົວໜ້າພະແນກການລົງທຶນ, ກົມແຜນການ ແລະ ການຮ່ວມມື, ກະຊວງ ພະລັງງານ ແລະ ບໍ່ແຮ່ ໂດຍສຸມໃສ່ການເຈລະຈາສັນຍາສຳປະທານ (CA) ແລະ ການ ພົວພັນສາກົນ.
- 2020 ຮອງຫົວໜ້າຝ່າຍທຸລະກິດ ສັງກັດ ລັດວິສາຫະກິດໄຟຟ້າລາວ, ຮັບຜິດຊອບການ ວິເຄາະດ້ານການເງິນ ແລະ ໜີ້ສິນ.
- 2020-2022 ຫົວໜ້າຝ່າຍແຜນການ-ການເງິນສັງກັດ ລັດວິສາຫະກິດໄຟຟ້າລາວ.
- 2022-2024 ຮອງຜູ້ອຳນວຍການ ລັດວິສາຫະກິດໄຟຟ້າລາວ, ຜູ້ຊ່ວຍຜູ້ຈັດການດ້ານການເງິນ ແລະ ການເຈລະຈາສັນຍາ.
- 07/2024-03/2025 ຜູ້ອຳນວຍການໃຫຍ່ ບໍລິສັດ ໄຟຟ້ານ້ຳງື່ມ 3 ຈຳກັດ.
- 03/2025- 08/2026 ຮອງຜູ້ອຳນວຍການ ລັດວິສາຫະກິດໄຟຟ້າລາວ / ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 08/2026-ປັດຈຸບັນ ຜູ້ອຳນວຍການ ບໍລິສັດ ລັດວິສາຫະກິດໄຟຟ້າລາວ.

ທ່ານ ວິເລດ ກົມມາວົງ
ກຳມະການສະພາບໍລິຫານ



ວັນ/ເດືອນ/ປີເກີດ: 25/03/1979
ອາຍຸ : 47 ປີ
ສັນຊາດ : ລາວ
ທີ່ຢູ່ປັດຈຸບັນ : ບ້ານ ໂນນສະຫວ່າງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ : ປະລິນຍາໂທ ສາຂາວິຊາ International and Development Economics, ມະຫາວິທະຍາໄລ ອົດສະຕາລີ.
ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາໄທ

ຄະນະສະພາບໍລິຫານ

ປະສົບການ:

- 2003-2005 ວິຊາການພະແນກການເງິນມະຫາພາກ, ກົມນະໂຍບາຍການເງິນ, ກະຊວງການເງິນ.
- 2005-2012 ຖືກແຕ່ງຕັ້ງໄປເຮັດວຽກໃຫ້ພະແນກສະຖິຕິການເງິນ, ກົມນະໂຍບາຍການເງິນ, ກະຊວງການເງິນ.
- 2012-2015 ຮອງຫົວໜ້າພະແນກສະຖິຕິການເງິນ, ກະຊວງການເງິນ.
- 2015-2017 ຫົວໜ້າພະແນກສະຖິຕິການເງິນ, ກະຊວງການເງິນ.
- 2018-2021 ຫົວໜ້າພະແນກແຜນການສ່ວຍສາອາກອນ ແລະ ການຮ່ວມມືສາກົນ, ກະຊວງການເງິນ.
- 08/2021-2023 ຮອງຫົວໜ້າກົມສ່ວຍສາອາກອນ, ກະຊວງການເງິນ.
- 11/2023 – 09/2024 ວ່າການຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ.
- 09/2024 - ປັດຈຸບັນ ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ.

ທ່ານ ຊົນລະວິດ ວິນິດໄສ
ກຳມະການສະພາບໍລິຫານ



ວັນ/ເດືອນ/ປີເກີດ: 12/03/1978
ອາຍຸ: 48 ປີ
ສັນຊາດ: ໄທ
ທີ່ຢູ່ປັດຈຸບັນ: ບ້ານ ຫນອງດ້ອງເຫນືອ, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ວິທະຍາສາດ (ການເງິນ ແລະ ທະນາຄານ) ຫຼັກສູດພາສາອັງກິດ ແລະ ປະລິນຍາໂທ ວິສະວະກຳໄຟຟ້າ ມະຫາວິທະຍາໄລ ຈຸລາລົງກອນ, ປະເທດໄທ
ຄວາມຮູ້ພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາລາວ

ຝຶກອົບຮົມ:

- Director Certification Program ຮຸ່ນທີ 311/2021, ທີ່ Institute Of Director, ປະເທດໄທ.
- ວິສະວະກອນວິຊາຊີບອາວຸໂສ - ວິສະວະກຳໄຟຟ້າ, ສະຖາບັນວິສະວະກຳແຫ່ງປະເທດໄທ (EIT).
- ໂຄງການພາວະຄວາມເປັນຜູ້ນຳ (LSP), ຫ້ອງ 15, ສະຖາບັນຄົ້ນຄວ້າ ແລະ ພັດທະນາວິສາຫະກິດຂອງລັດ (IRDP).
- ຫຼັກການຄວາມເປັນຜູ້ນຳ, Harvard Business School ອອນລາຍ.
- ກົນລະຍຸດຂອງ CFO ໃນຕະຫຼາດທຶນ, ຕະຫຼາດຫຼັກຊັບແຫ່ງປະເທດໄທ.
- ການບໍລິຫານຈັດການໂຄງການ, ສະຖາບັນບໍລິຫານຈັດການ, ຊິດນີ້, Commonwealth of Australia.
- ໂຄງການກົນລະຍຸດຜູ້ບໍລິຫານທາງການເງິນ (SFLP), ສະມາຄົມບໍລິສັດຈົດທະບຽນໃນປະເທດໄທ.
- Human Capital Management (HCM), ຮຸ່ນທີ 1, ສະຖາບັນວິໄຈ ແລະ ພັດທະນາອົງການອນພາກລັດ (IRDP).
- ໂຄງການຮ່ວມມືລະຫວ່າງຜູ້ບໍລິຫານພາກລັດ ແລະ ເອກະຊົນ (PEP), IRDP.
- ການຄຸ້ມຄອງຄວາມສ່ຽງ ແລະ ຊັບສິນຂອງອຸປະກອນໄຟຟ້າ, IEEE ປະເທດໄທ.
- ສັນຍາການຄ້າທີ່ສຳຄັນສຳລັບຜູ້ຈັດການທີ່ບໍ່ແມ່ນນັກກົດຫມາຍ, ການລົງທຶນ ແລະ ການສຶກສາຄວາມເປັນໄປໄດ້ຂອງໂຄງການ, Asia Business Connect.

ປະສົບການ:

- 2018-2021 ຜູ້ອຳນວຍການ ຝ່າຍພັດທະນາທຸລະກິດຕ່າງປະເທດ, ບໍລິສັດ ຣາຊ ກຣຸບ ຈຳກັດ (ມະຫາຊົນ).
- 2019-2022 ກຳມະການສະພາບໍລິຫານ, ບໍລິສັດ RATCH-Australia Yandin Wind Farm (Holdings) Pty Ltd.
  ກຳມະການສະພາບໍລິຫານ, ບໍລິສັດ Yandin Wind Farm Finance Pty Ltd.
- 2019 - 2023 ກຳມະການສະພາບໍລິຫານ, ບໍລິສັດ ເອເຊຍ ນ້ຳປະປາ ຈຳກັດ.
- 2021 ຜູ້ອຳນວຍການຝ່າຍ, ບໍລິສັດ ຣາຊ ກຣຸບ ຈຳກັດ (ມະຫາຊົນ), ທັງເປັນຜູ້ອຳນວຍການບໍລິສັດ ຣາຊລາວ ບໍລິການ ຈຳກັດ ແລະ ບໍລິສັດ ເອເຊຍນ້ຳປະປາ ຈຳກັດ.
- 2021 - 2023 ຜູ້ອຳນວຍການບໍລິສັດ ເອເຊຍ ນ້ຳປະປາ ຈຳກັດ.
- 2022 ຜູ້ອຳນວຍການຝ່າຍອາວຸໂສ ບໍລິສັດ ຣາຊ ກຣຸບ ຈຳກັດ (ມະຫາຊົນ), ທັງເປັນຜູ້ອຳນວຍການ ບໍລິສັດ ຣາຊ ລາວບໍລິການ ຈຳກັດ, ບໍລິສັດ Fareast ການພັດທະນາພະລັງງານທົດແທນ, ບໍລິສັດ ເອເຊຍ ນ້ຳປະປາ ຈຳກັດ ແລະ ບໍລິສັດ ເຊກອງ ທີ່ປຶກສາດ້ານການ ລົງທຶນ ຈຳກັດ.
- 2023 ຮັກສາການຜູ້ຊ່ວຍຜູ້ອຳນວຍການໃຫຍ່ ພັດທະນາທຸລະກິດໄຟຟ້າໃນປະເທດ ແລະ ປະເທດເພື່ອນບ້ານ, ບໍລິສັດ ຣາຊ ກຣຸບ ຈຳກັດ.
- 2022 - 2025 ກຳມະການສະພາບໍລິຫານ ແລະ ຜູ້ອຳນວຍການ, ບໍລິສັດ ເຊກອງ 4 ພາວເວີ ຈຳກັດ.
- 2025 - ປັດຈຸບັນ ປະທານສະພາບໍລິຫານ, ບໍລິສັດ ອາອີ ພະລັງງານ ສີຂຽວ ຈຳກັດ.
  ປະທານສະພາບໍລິຫານ, ບໍລິສັດ ຣາຊບູລີ ພະລັງງານ ຈຳກັດ.



ຄະນະສະພາບໍລິຫານ

ທ່ານ ສຈ. ປອ. ພູເພັດ ກ້ຽວພິລາວົງ
ກຳມະການ ສະພາບໍລິຫານອິດສະຫຼະ

ວັນ/ເດືອນ/ປີເກີດ: 05/02/1974
ອາຍຸ : 52 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ດອນນົກຂຸ້ມ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາເອກ ສາຂາວິຊາເສດຖະສາດ ມະຫາວິທະຍາໄລ ໂຄເບ, ປະເທດຍີ່ປຸ່ນ.
ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາຍີ່ປຸ່ນ

ຝຶກອົບຮົມ:

- 2005 ແລກປ່ຽນບົດຮຽນ ຮ່ວມກັບ ສະຖາບັນພັດທະນາເສດຖະກິດ (IDE), ໂຕກຽວ ປະເທດຍີ່ປຸ່ນ.
- 2008 ຖອດຖອນບົດຮຽນ ຮ່ວມກັບ ພະແນກຄົ້ນຄວ້າເສດຖະກິດ, ມະຫາວິທະຍາໄລ Nagoya, ປະເທດ ຍີ່ປຸ່ນ.
- 2009-2010 ຖອດຖອນບົດຮຽນກັບອາຈານທີ່ຈົບການສຶກສາການພັດທະນາສາກົນ (GSID).
- 2010-2011 ແລກປ່ຽນບົດຮຽນກັບ ມະຫາວິທະຍາໄລ Laval, ປະເທດການາດາ.
- 2013 ແລກປ່ຽນບົດຮຽນໂຄງການ US-ASEAN Fulbright, ພະແນກເສດຖະກິດ, ມະຫາວິທະຍາໄລ Harward, ສະຫະລັດອາເມລິກາ.
- 2016 ແລກປ່ຽນບົດຮຽນທີ່ ໂຮງຮຽນ Kennedy, ມະຫາວິທະຍາໄລ Harward, ສະຫະລັດອາເມລິກາ.
- 2017 ຖອດຖອນບົດຮຽນ Graduate school of International Cooperation studies (GSICS), ມະຫາວິທະຍາໄລ Kobe, ປະເທດຍີ່ປຸ່ນ.

ປະສົບການ:

- 2003-2008 ອາຈານສອນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.
- 2004-2006 ຮອງຫົວໜ້າພະແນກຄົ້ນຄວ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.
- 2005 ເປັນນັກຄົ້ນຄວ້າຮັບເຊີນ, ສະຖາບັນພັດທະນາເສດຖະກິດ, ປະເທດຍີ່ປຸ່ນ.
- 2006-2008 ຮອງຫົວໜ້າພາກເສດຖະສາດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.
- 2008 ຮອງສາດສະດາຈານ, ຫົວໜ້າພະແນກຄົ້ນຄວ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມຊ.
- 2009 ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕີການພັດທະນາສາກົນ, ມະຫາວິທະຍາໄລນາໂກຍາ, ປະເທດຍີ່ປຸ່ນ.
- 2010 ນັກຄົ້ນຄວ້າຮັບເຊີນ, ມະຫາວິທະຍາໄລລາວານ, ປະເທດການາດາ.
- 2011 ຮອງສາດສະດາຈານຮັບເຊີນ ມະຫາວິທະຍາໄລນັນຢັງ, ປະເທດສິງກະໂປ.
- 2013 ນັກຄົ້ນຄວ້າຮັບເຊີນອາເມລິກາ-ອາເຊັຍ, ພະແນກເສດຖະກິດ, ມະຫາວິທະຍາໄລຮາເວີດ, ສະຫະລັດອາເມລິກາ
- 2013 ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.
- 2015 ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕີການບໍລິຫານ, ມະຫາວິທະຍາໄລກຽວໂຕ, ປະເທດຍີ່ປຸ່ນ.
- 2017 ຮອງສາດສະດາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕີການສຶກສາການຮ່ວມມືສາກົນ, ມະຫາວິທະຍາໄລ ໂຄເບ, ປະເທດຍີ່ປຸ່ນ.
- 2021 ຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.
- 2023-ປັດຈຸບັນ ສາດສະດາຈານ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.
- 2024-ປັດຈຸບັນ ຮອງຜູ້ອຳນວຍການໃຫຍ່, ມະຫາວິທະຍາໄລແຫ່ງຊາດ.

ທ່ານ ພັນປານີ ສິດທິລາດ
ກຳມະການ ສະພາບໍລິຫານອິດສະຫຼະ



ວັນ/ເດືອນ/ປີເກີດ: 12/01/1975
ອາຍຸ : 51 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ວຽງຈະເລີນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາວິຊາ ການບັນຊີ, ປະເທດລາວ.
ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາໄທ

ປະສົບການ:

- 2000 ວິຊາການ ສັງກັດກົມບໍລິການ ທະນາຄານ ແຫ່ງ ສປປ ລາວ.
- 2008-2010 ຮອງຫົວໜ້າພະແນກບັນຊີ ຢູ່ກົມບໍລິການ , ທະນາຄານ ແຫ່ງ ສປປ ລາວ.
- 2011-2012 ຫົວໜ້າພະແນກບັນຊີ ຢູ່ກົມບໍລິການ, ທະນາຄານ ແຫ່ງ ສປປ ລາວ.
- 2018-2019 ຮອງຫົວໜ້າກົມຄຸ້ມຄອງລະບົບຊຳລະ, ທະນາຄານ ແຫ່ງ ສປປ ລາວ.
- 2019-12/2025 ຮອງຫົວໜ້າກົມບໍລິການທະນາຄານ , ທະນາຄານ ແຫ່ງ ສປປ ລາວ.
- 2025-ປັດຈຸບັນ ຮອງຜູ້ອຳນວຍການກອງທຶນລາຟ ແລະ ຄະນະກຳມະການ EC, ເປັນຄະນະກຳມະການ ສະພາບໍລິຫານບໍລິສັດກາເຟດາວ.
- 12/2025-ປັດຈຸບັນ ວ່າການແທນຫົວໜ້າສາຂາສະຫວັນນະເຂດ, ທະນາຄານແຫ່ງ ສປປ ລາວ.

ທ່ານ ດາວວຽງ ສຸນັນທະລາດ
ຮັກສາການຜູ້ອຳນວຍການໃຫຍ່


ຄະນະຜູ້ອຳນວຍການໃຫຍ່

ວັນ/ເດືອນ/ປີເກີດ: 03/05/1972
ອາຍຸ: 54 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ເມືອງນ້ອຍ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາວິຊາ ວິສະວະກຳພະລັງງານ, ມະຫາວິທະຍາໄລຊຽງໃໝ່, ຈັງຫວັດ ຊຽງໃໝ່, ປະເທດໄທ
ດ້ານພາສາຕ່າງປະເທດ: ພາສາອັງກິດ, ພາສາຣັດເຊຍ ແລະ ພາສາໄທ

ຝຶກອົບຮົມ:

- 2008 ຝຶກອົບຮົມວິຊາ " ການບໍລິຫານຈັດການນ້ຳໃນອ່າງນ້ຳງື່ມ 1 ໂດຍໃຊ້ໂປຼແກຼມ PARSIFAL" ຢູ່ ສູນຝຶກອົບຮົມ EDF, ເມືອງ ກິນນອບເບ, ແຂວງ ລີຢົງ, ປະເທດ ຝຣັ່ງ
- 2010 ຝຶກອົບຮົມວິຊາ " Hydro power and the Environment HE210 " ຢູ່ສູນຝຶກອົບຮົມ ICH, ເມືອງ ໂທລນແຮມ, ປະເທດ ນໍເວ
- 2010 ບຳລຸງທິດສະດີການເມືອງໄລຍະສັ້ນ 45 ວັນ, ການເມືອງ ແລະ ການປົກຄອງ ແຂວງ ວຽງຈັນ.
- 2015 ທັກສະໃນການເປັນຜູ້ນຳ ແລະ ການສ້າງທີມງານ.
- 2017 ຝຶກອົບຮົມຜູ້ກວດສອບພາຍນອກສຳລັບການອັບເດດ ISO 14001.2015 EMS ຢູ່ ເຂື່ອນໄຟຟ້ານ້ຳງື່ມ 1, ແຂວງວຽງຈັນ ໂດຍ Mr. HO Yoon Sin ຊ່ຽວຊານປະເທດ ມາເລເຊຍ.
- 2017 Analysis of Hydroelectric Project Feasibility Study (FS).
- 2018 Capacity Building on IWRM Master Plan for NamNgum River Basin in Lao PDR" ຢູ່ K-Water Center, ປະເທດ ສ. ເກົາຫຼີ.
- 2020 ການບັນຊີ ໃນຫົວຂໍ້ "ເຜີຍແຜ່ຮູບແບບເອກະສານລາຍງານການເງິນ ການບັນຊີ ວິສາຫະກິດ ປັບປຸງປີ 2020" ໂດຍວິທະຍາກອນຈາກກົມບັນຊີກະຊວງການເງິນ.
- 2022 ກະກຽມສັນຍາ ແລະ ປະເມີນການບໍລິການວຽກ O&M ໃຫ້ກັບລູກຄ້າHydro power O&M Contract Management and O&M Cost Estimate.
- 2023 ການບໍລິຫານຄວາມສ່ຽງ ແລະ non-finance ໂດຍ ບໍລິສັດ ອີແອນອີ ເອັນຈີເນຍຣິ້ງ ແອນ ເຊີວິດ ຈຳກັດ.
- 2023 ການບໍລິຫານແຜນສຳລັບວິຊາການ.

ປະສົບການ:

- 2010 - 2015 ຫົວໜ້າພະແນກຜະລິດ-ຄວບຄຸມ, ເຂື່ອນໄຟຟ້ານ້ຳງື່ມ 1, ຜ-ຟຟລ.
- 03/2014 - 2016 ຮອງຫົວໜ້າໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ ຈັກເບີ 7-8, ແລະ ຫົວໜ້າພະແນກ ຜະລິດ-ຄວບຄຸມ, ເຂື່ອນໄຟຟ້ານ້ຳງື່ມ 1, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 06/2016 - 06/2020 ຮອງຜູ້ອຳນວຍການເຂື່ອນໄຟຟ້ານ້ຳງື່ມ 1, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 06/2020 - 09/2021 ວ່າການຜູ້ອຳນວຍການຝ່າຍພັດທະນາທຸລະກິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 09/2021 - 08/2022 ຜູ້ອຳນວຍການຝ່າຍແຜນການ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 08/2022 - 11/2023 ຜູ້ອຳນວຍການຝ່າຍເຕັກນິກ, ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ.
- 11/2023 – 10/2024 ຮອງຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 11/2024 – 03/2025 ຮັກສາການ ຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 03/2025 - 08/2026 ຮອງຜູ້ອຳນວຍການໃຫຍ່ ສາຍງານພັດທະນາທຸລະກິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 08/2026-ປັດຈຸບັນ ຮັກສາການ ຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.


ຄະນະຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ທລວງໄຊ
ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ວັນ/ເດືອນ/ປີເກີດ: 18/06/1977
ອາຍຸ: 49 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ເມືອງນ້ອຍ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາວິຊາ ຄຸ້ມຄອງເສດຖະກິດ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ, ປະເທດລາວ
ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາໄທ

ຝຶກອົບຮົມ:

- 2013 HR for Line Managers ຈາກ Thailand Management Association (TMA).
- 2013 ການບັນຊີ ແລະ ການເງິນ ສຳລັບຜູ້ບໍລິຫານ ຈາກ ສູນທີ່ປຶກສາ ແທັກໂດ.
- 2013 ບຳລຸງທິດສະດີການເມືອງ ການປົກຄອງຂັ້ນສູງ ທີ່ສະຖາບັນການເມືອງການປົກຄອງແຫ່ງຊາດ.
- 2014 Lao Professional Investment Banking I (ການທະນາຄານເພື່ອການລົງທຶນຢ່າງມືອາຊີບລາວ ລຸ້ນທີ 1) ທີ່ຕະຫຼາດຫຼັກຊັບລາວ.
- 2015 ການບັນຊີວິສາຫະກິດ (ສະບັບປັບປຸງ) ທີ່ ນະຄອນຫຼວງວຽງຈັນ.
- 2015 Business English Language Course ລະດັບ Intermediate ທີ່ ປະເທດອົດສະຕາລີ.
- 2017 ISO 9001:2015 Quality Management System ທີ່ ສຳນັກງານໃຫຍ່ ຜ-ຟຟລ.
- 2018 Internal Auditing: Progress Through Sharing ທີ່ ນະຄອນຫຼວງວຽງຈັນ.
- 2020 ຮູບແບບເອກະສານລາຍງານການເງິນ, ຜັງບັນຊີ ແລະ ລະບົບບັນຊີສຳລັບ ວິສາຫະກິດ ທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ.
- 2022 ຫລັກສູດຝຶກອົບຮົມໄລຍະສັ້ນ ໃນການສ້າງຄວາມເຂັ້ມແຂງ ດ້ານມາດຕະຖານສາກົນ ດ້ານການລາຍງານການເງິນ (IFRS) ສຳລັບພະນັກງານການນຳ ທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
- 2024 ວຽກງານຈັດຕັ້ງ, ກໍ່ສ້າງພັກ ແລະ ພະນັກງານ ທີ່ ກະຊວງພະລັງງານ ແລະ ບໍ່ແຮ່.

ປະສົບການ:

- 2008 - 2013 ຫົວໜ້າໜ່ວຍງານແຜນການ-ການເງິນ, ເຂື່ອນໄຟຟ້ານ້ຳງື່ມ 1.
- 03/2013 - 09/2016 ຮອງຫົວໜ້າພະແນກບັນຊີ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 09/2016 - 2020 ຫົວໜ້າພະແນກບັນຊີ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 2020 - 07/2020 ຮອງຜູ້ອຳນວຍການຝ່າຍການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 07/2020 - 13/09/2021 ວ່າການຜູ້ອຳນວຍການຝ່າຍການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 09/2021 - 03/2025 ຜູ້ອຳນວຍການຝ່າຍການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 03/2025 - ປັດຈຸບັນ ຮອງຜູ້ອຳນວຍການໃຫຍ່ສາຍງານການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

ທ່ານ ນາງ ໂພຄົນ ອັບໄພ
ຮອງຜູ້ອຳນວຍການໃຫຍ່ ສາຍງານບໍລິຫານ



ວັນ/ເດືອນ/ປີເກີດ: 15/12/1971
ອາຍຸ: 55 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາວິຊາ ການຈັດການພາກລັດ, ສະຖາບັນບັນດິດ ພັດທະນະບໍລິຫານສາດ (NIDA), ປະເທດໄທ.
ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາໄທ

ຝຶກອົບຮົມ:

- 2011 Leadership and Human Resource Management by Manager ທີ່ ສູນຝຶກ OCG.
- 2012 Arbitration and Project Financing ທີ່ ບໍລິສັດທີ່ປຶກສາກົດໝາຍ LS Horizon, ປະເທດໄທ.
- 2014 Company Secretary Program ຮຸ່ນທີ 57/2014 ທີ່ Institute Of Director, ປະເທດໄທ.
  Board Reporting Program-BRP ຮຸ່ນທີ 14/2014 ທີ່ Institute Of Director, ປະເທດ ໄທ.
  Company Reporting Program ຮຸ່ນທີ 9/2014 ທີ່ Institute Of Director, ປະເທດໄທ.
- 2015 ພາສາອັງກິດທົ່ວໄປໄລຍະສັ້ນ ລະດັບ Intermediate ທີ່ ປະເທດອົດສະຕາລີ.
- 2022 ຜູ້ບໍລິຫານທີ່ມີຄຸນນະພາບ ເພື່ອການບໍລິຫານແບບມືອາຊີບ ທີ່ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ.
- 2023 ວຽກງານຈັດຕັ້ງ, “ກໍ່ສ້າງພັກ ແລະ ພະນັກງານ” ທີ່ ກະຊວງພະລັງງານ ແລະ ບໍ່ແຮ່.

ປະສົບການ:

- 2006 - 2008 ຫົວໜ້າໜ່ວຍງານຫ້ອງການຄະນະກຳມະການທຸລະກິດ ແລະ ຄະນະກອງເລຂາສະພາບໍລິຫານ ຟຟລ.
- 2008 - 2010 ຮອງຫົວໜ້າຫ້ອງການຜູ້ອຳນວຍການ ແລະ ພົວພັນຕ່າງປະເທດ, ລັດວິສາຫະກິດໄຟຟ້າລາວ.
- 2010 - 2020 ຫົວໜ້າພະແນກເລຂານຸການບໍລິສັດ ແລະ ຫົວໜ້າກອງເລຂາສະພາບໍລິຫານ ຜ-ຟຟລ.
- 07/2020 - 09/2021 ວ່າການຜູ້ອຳນວຍການຝ່າຍບໍລິຫານງານສະໜັບສະໜູນອົງກອນ ແລະ ຫົວໜ້າກອງເລຂາ ສະພາບໍລິຫານ ຜ-ຟຟລ.
- 10/2021 - 03/2025 ຜູ້ອຳນວຍການຝ່າຍບໍລິຫານງານສະໜັບສະໜູນອົງກອນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 03/2025 - ປັດຈຸບັນ ຮອງຜູ້ອຳນວຍການໃຫຍ່ ສາຍງານບໍລິຫານ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.



ຄະນະຜູ້ອຳນວຍການໃຫຍ່

ທ່ານ ສິລິພົມ ແສງອ່ອນແກ້ວ
ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ

ວັນ/ເດືອນ/ປີເກີດ:	10/03/1970
ອາຍຸ:	56 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ໂພນສະຫວັນເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ປະລິນຍາໂທ ສາຂາວິຊາ ວິສະວະກຳຊົນລະປະທານ, ມະຫາວິທະຍາໄລແຫ່ງຊາດ, ປະເທດລາວ.
ດ້ານພາສາຕ່າງປະເທດ:	ພາສາອັງກິດ ແລະ ພາສາໄທ

ຝຶກອົບຮົມ:

1998	ບັນຊາ ແລະ ບຳລຸງຮັກສາ ອຸປະກອນໄຟຟ້າຂອງໂຮງງານໄຟຟ້ານ້ຳຕົກ (ກຽມເຂົ້າໂຄງການເຂື່ອນນ້ຳເລິກ) ທີ່ ສູນຝຶກອົບຮົມໄຟຟ້າລາວ.
2002	Maintenance Informatique Industrielle I21 ທີ່ ສູນຝຶກອົບຮົມໄຟຟ້າລາວ.
2003	Electricite Niveau 2 G22 ທີ່ ສູນຝຶກອົບຮົມໄຟຟ້າລາວ.
2003	Protection Application Planning of Project PTD1 ທີ່ ສູນຝຶກອົບຮົມໄຟຟ້າລາວ.
2010	ບຳລຸງທິດສະດີການເມືອງໄລຍະສັ້ນ 45 ວັນ, ການເມືອງ ແລະ ການປົກຄອງ ແຂວງ ວຽງຈັນ
2012	Practical Project Management in the Global Market ຈາກ The AIM of the Philippine.
2013	Employee Motivation to High Performance ທີ່ ສູນຝຶກ OCG.
2014	English for Lao Government Officials Module 3 (500 Hours) ທີ່ ສະຖາບັນການຕ່າງປະເທດ
2015	ທັກສະການເຮັດວຽກເປັນທີມ ແລະ ທັກສະການເປັນຜູ້ນຳ.

ປະສົບການ:

07/2000 - 02/2004	ຫົວໜ້າໜ່ວຍງານບຳລຸງຮັກສາ ແລະ ສ້ອມແປງອຸປະກອນໄຟຟ້າ, ເຂື່ອນໄຟຟ້ານ້ຳເລິກ.
02/2004 - 08/2006	ຮອງຫົວໜ້າພະແນກບຳລຸງຮັກສາ ແລະ ສ້ອມແປງອຸປະກອນໄຟຟ້າ, ເຂື່ອນໄຟຟ້ານ້ຳເລິກ.
08/2006 - 01/2013	ຫົວໜ້າພະແນກບຳລຸງຮັກສາ ແລະ ສ້ອມແປງອຸປະກອນໄຟຟ້າ, ເຂື່ອນໄຟຟ້ານ້ຳເລິກ.
01/2013 - 03/2017	ຮອງຜູ້ອຳນວຍການເຂື່ອນ, ເຂື່ອນໄຟຟ້ານ້ຳເລິກ.
03/2017 - 09/2019	ຜູ້ອຳນວຍການເຂື່ອນ, ເຂື່ອນໄຟຟ້ານ້ຳມັງ 3.
09/2019 - 11/2020	ຜູ້ອຳນວຍການເຂື່ອນ, ເຂື່ອນໄຟຟ້ານ້ຳງື່ມ 1.
12/2020 - 06/2021	ຮອງຜູ້ອຳນວຍການ, ບໍລິສັດ ບໍລິການ ຄຸ້ມຄອງການຜະລິດ-ບຳລຸງຮັກສາ ອີດີແອລເຈນ ຈຳກັດ
06/2021 - 02/2024	ຜູ້ອຳນວຍການຝ່າຍຜະລິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
02/2024 - 03/2025	ຜູ້ອຳນວຍການ, ບໍລິສັດ ບໍລິການ ອີແອນອີ ເອັນຈີເນຍຣິ່ງ ແອນ ເຊີວິດສ ຈຳກັດ (E&E).
03/2025 - ປັດຈຸບັນ	ຮອງຜູ້ອຳນວຍການໃຫຍ່ສາຍງານຜະລິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

III. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ

1. ກອງປະຊຸມສະພາບໍລິຫານ

ການດຳເນີນງານ ໄຕມາດ 03 ປີ 2026 ຂອງສະພາບໍລິຫານ ຜ-ຟຟລ ແມ່ນ ໄດ້ດຳເນີນການຈັດກອງປະຊຸມສະພາບໍລິຫານ ຈຳນວນ 01 ຄັ້ງ, ລາຍລະອຽດດັ່ງລຸ່ມນີ້:

- **ກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 03/2026, ຄັ້ງວັນທີ 17/08/2026:**

1. ອະນຸມັດ ບົດລາຍງານຜົນການດຳເນີນທຸລະກິດ ລວມທັງບົດລາຍງານການເງິນ ຂອງບໍລິສັດ ປະຈຳ 06 ເດືອນ ຕົ້ນປີ 2026.
2. ລາຍງານຄວາມຄືບໜ້າ ບັນດາວຽກງານ ທີ່ຕິດພັນກັບສະພາບໍລິຫານ.

2. ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

ເພື່ອຮັບປະກັນການດຳເນີນງານຂອງ ບໍລິສັດ ໃຫ້ມີຄຸນນະພາບ, ໂປ່ງໃສ, ມີປະສິດທິຜົນ ແລະ ສອດຄ່ອງກັບຂໍ້ກຳນົດ, ລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ, ສະພາບໍລິຫານ ຜ-ຟຟລ ໄດ້ກຳນົດໃຫ້ມີຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ ຈຳນວນ 04 ຄະນະກຳມະການ, ເພື່ອຊ່ວຍສະພາບໍລິຫານໃນການຄຸ້ມຄອງ, ຕິດຕາມ, ພິຈາລະນາ ແລະ ກັ່ນຕອງວຽກງານໃນຂອບເຂດທີ່ໄດ້ຮັບມອບໝາຍ ປະກອບດ້ວຍ:

1. ຄະນະກຳມະການ ຄຸ້ມຄອງບໍລິຫານ;
2. ຄະນະກຳມະການ ຄຸ້ມຄອງຄວາມສ່ຽງ;
3. ຄະນະກຳມະການ ຄັດເລືອກ ແລະ ກຳນົດຄ່າຕອບແທນ;
4. ຄະນະກຳມະການ ກວດສອບ.

2.1 ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານ ຂອງ ຜ-ຟຟລ ປະກອບມີ 03 ທ່ານຄື: ປະທານຄະນະກຳມະການ 01 ທ່ານ, ຮອງປະທານຄະນະກຳມະການ 01 ທ່ານ ແລະ ກຳມະການ 01 ທ່ານ, ຕາມລາຍລະອຽດດັ່ງນີ້:

ສະມາຊິກ ຂອງຄະນະກຳມະການຄຸ້ມຄອງບໍລິຫານ		
ທ່ານ ສຸກສະຫວາດ ໂສສຸພັນ	ກຳມະການສະພາບໍລິຫານ	ເປັນປະທານ
ທ່ານ ຊົນລະວິດ ວິນິດໄສ	ກຳມະການສະພາບໍລິຫານ	ເປັນຮອງປະທານ
ທ່ານ ປອ. ອາຄົມເດດ ວົງໄຊ	ຮອງປະທານສະພາບໍລິຫານ	ເປັນກຳມະການ

- **ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງບໍລິຫານ**

ການດຳເນີນງານປະຈຳ ໄຕມາດ 03 ປີ 2026 ຂອງຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ຈັດກອງປະຊຸມໃນວັນທີ 14 ສິງຫາ 2026, ເພື່ອພິຈາລະນາທົບທວນລະບຽບການຄຸ້ມຄອງ, ນຳໃຊ້ພາຫະນະຮັບໃຊ້ວຽກງານບໍລິຫານ, ການປະກອບນະໂຍບາຍພາຫະນະ, ເງິນອຸດໜູນພາຫະນະ ແລະ ນ້ຳມັນເຊື້ອໄຟໃຫ້ແກ່ພະນັກງານ. ນອກນີ້, ຄະນະກຳມະການຍັງໄດ້ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດຄວາມຮັບຜິດຊອບຕໍ່ສັງຄົມ ຕາມນະໂຍບາຍຫາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ສະບັບປັບປຸງຄັ້ງທີ 3) ແລະ ປັ່ງປຸງກົດລະບຽບ-ອຳນາດການດຳເນີນງານຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

III. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ

2.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຂອງ ຜ-ຟຟລ ປະກອບມີ 03 ທ່ານຄື: ປະທານຄະນະກຳມະການ 01 ທ່ານ, ຮອງປະທານຄະນະກຳມະການ 01 ທ່ານ ແລະ ກຳມະການ 01 ທ່ານ, ຕາມລາຍລະອຽດດັ່ງນີ້:

ສະມາຊິກ ຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ		
ທ່ານ ວິເລດ ກິນນາວົງ	ກຳມະການສະພາບໍລິຫານ	ເປັນປະທານ
ທ່ານ ພັນປາມີ ສິດທິລາດ	ກຳມະການອິດສະຫຼະ	ເປັນຮອງປະທານ
ທ່ານ ສຈ.ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫຼະ	ເປັນກຳມະການ

- **ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ**

ການດຳເນີນງານປະຈຳ ໄຕມາດ 03 ປີ 2026, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ຈັດກອງປະຊຸມສະໄໝວິສາມັນ ຄັ້ງທີ 1/2026, ໃນວັນທີ 09/07/2026 ເພື່ອດຳເນີນການພິຈາລະນາ ແລະ ຄົ້ນຄວ້າບາງວາລະສຳຄັນ ດັ່ງນີ້:

1. ການປັບປຸງແຜນງົບປະມານປະຈຳ 6 ເດືອນທ້າຍປີ 2026 ຂອງ ຜ-ຟຟລ;
2. ແຜນຍຸດທະສາດການດຳເນີນທຸລະກິໄລຍະຍາວ;
3. ຄວາມຄືບໜ້າແຜນການອອກຈຳໜ່າຍຮຸ້ນກູ້ທີ່ຕະຫຼາດຕ່າງປະເທດ.

2.3 ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ຂອງ ຜ-ຟຟລ ປະກອບມີ 03 ທ່ານຄື: ປະທານຄະນະກຳມະການ 01 ທ່ານ, ຮອງປະທານຄະນະກຳມະການ 01 ທ່ານ ແລະ ກຳມະການ 01 ທ່ານ, ຕາມລາຍລະອຽດດັ່ງນີ້:

ສະມາຊິກ ຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ		
ທ່ານ ສຈ.ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫຼະ	ເປັນປະທານ
ທ່ານ ສຸລິວັດ ສຸວັນນະຈູມຄຳ	ປະທານສະພາບໍລິຫານ	ເປັນຮອງປະທານ
ທ່ານ ຊົນລະວິດ ວິນິດໄສ	ກຳມະການສະພາບໍລິຫານ	ເປັນກຳມະການ

- **ການເຄື່ອນໄຫວຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ**

ການດຳເນີນງານປະຈຳໄຕມາດ 3 ປີ 2026 ຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ໄດ້ດຳເນີນການຄົ້ນຄວ້າ ບັນຫາສຳຄັນຕ່າງໆ ຕາມພາລະບົດບາດ ແລະ ໜ້າທີ່ຂອງຄະນະກຳມະການຢ່າງເປັນປົກກະຕິ.

III. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ

2.4 ຄະນະກຳມະການກວດສອບ

ຄະນະກຳມະການກວດສອບ ຂອງ ຜ-ຟຟລ ປະກອບມີ 03 ທ່ານຄື: ປະທານຄະນະກຳມະການ 01 ທ່ານ, ຮອງປະທານຄະນະກຳມະການ 01 ທ່ານ ແລະ ກຳມະການ 01 ທ່ານ, ຕາມລາຍລະອຽດດັ່ງນີ້:

ສະມາຊິກ ຂອງຄະນະກຳມະການກວດສອບ		
ທ່ານ ພັນປານີ ສິດທິລາດ	ກຳມະການອິດສະຫຼະ	ເປັນປະທານ
ທ່ານ ສຈ.ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫຼະ	ເປັນຮອງປະທານ
ທ່ານ ວິເລດ ກິນນາວົງ	ກຳມະການສະພາບໍລິຫານ	ເປັນກຳມະການ

- **ການເຄື່ອນໄຫວຂອງຄະນະກຳມະການກວດສອບ**

ໃນການດຳເນີນງານປະຈຳ ໄຕມາດ 03 ປີ 2026 ຂອງຄະນະກຳມະການກວດສອບໄດ້ຈັດກອງປະຊຸມສາມັນ ຄັ້ງທີ III ຂຶ້ນໃນວັນທີ 13 ສິງຫາ 2026 ເພື່ອປຶກສາຫາລື ແລະ ພິຈາລະນາ ວາລະສຳຄັນດັ່ງນີ້:

- ທົບທວນບົດລາຍງານຂໍ້ສະເໜີແນະຕໍ່ຄະນະຜູ້ບໍລິຫານ (Management Letter) ຂອງຜູ້ກວດສອບພາຍນອກ (PwC Laos) ກ່ຽວກັບຂໍ້ບົກຜ່ອງຂອງລະບົບຄວບຄຸມພາຍໃນ ທີ່ພົບເຫັນຈາກການທົບທວນ (Review) ເອກະສານລາຍງານການເງິນປະຈຳຫົກເດືອນຕົ້ນປີ 2026, ພ້ອມທັງຄຳຊີ້ແຈງ ແລະ ແຜນການແກ້ໄຂຂອງຄະນະຜູ້ບໍລິຫານ ຜ-ຟຟລ.
- ພິຈາລະນາທົບທວນເອກະສານລາຍງານການເງິນປະຈຳຫົກເດືອນຕົ້ນປີ 2026.
- ຕິດຕາມ ແລະ ທົບທວນຜົນການດຳເນີນທຸລະກິດປະຈຳຫົກເດືອນຕົ້ນປີ 2026.

3. ຄະນະກຳມະການທີ່ຂຶ້ນກັບ ຄະນະຜູ້ອຳນວຍການໃຫຍ່

ຄະນະກຳມະການ ທີ່ຂຶ້ນກັບຄະນະຜູ້ອຳນວຍການໃຫຍ່ ຜ-ຟຟລ ປະກອບມີ 03 ຄະນະກຳມະການລາຍລະອຽດດັ່ງນີ້:

- ຄະນະກຳມະການຈັດຊື້ - ຈັດຈ້າງ.
- ຄະນະກຳມະການ ສະສາງວັດຖຸອຸປະກອນ.
- ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ.

III. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ

3.1 ຄະນະກຳມະການຈັດຊື້-ຈັດຈ້າງ

ການດຳເນີນງານ ປະຈຳໄຕມາດ 03 ປີ 2026 ຄະນະກຳມະການ ຈັດຊື້-ຈັດຈ້າງ ຜ-ຟຟລ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານຈັດຊື້-ຈັດຈ້າງ ທັງໝົດ 03 ຄັ້ງຄື:

- ກອງປະຊຸມ ຄະນະກຳມະການຈັດຊື້ ສະໄໝສາມັນ ຄັ້ງທີ 03 ປະຈຳປີ 2026, ວັນທີ 01/07/2026.
- ກອງປະຊຸມ ຄະນະກຳມະການຈັດຊື້ ສະໄໝສາມັນ ຄັ້ງທີ 04 ປະຈຳປີ 2026, ວັນທີ 25/08/2026.
- ກອງປະຊຸມ ຄະນະກຳມະການຈັດຊື້ ສະໄໝວິສາມັນ ຄັ້ງທີ 04 ປະຈຳປີ 2026, ວັນທີ 04/09/2026.

ເຊິ່ງຄະນະກຳມະການດັ່ງກ່າວ ໄດ້ດຳເນີນການພິຈາລະນາ ຄັດເລືອກຜູ້ສະໜອງ ແລະ ຜູ້ຮັບເໝົາ ຕາມຂັ້ນຕອນ ແລະ ລະບຽບຈັດຊື້-ຈັດຈ້າງ ຂອງບໍລິສັດ, ເຊິ່ງວຽກຈັດຊື້ທີ່ດຳເນີນການມີທັງໝົດ 13 ວຽກ ແລະ ແບ່ງອອກເປັນ 03 ປະເພດ ດັ່ງນີ້: ແບ່ງອອກເປັນ 03 ພາກ 13 ໜ້າວຽກດັ່ງນີ້:

ພາກການປະຕິບັດວຽກ (WORK)	ຈຳນວນ: 01 ວຽກ
ພາກຈັດຊື້ສິນຄ້າ (GOODS)	ຈຳນວນ: 11 ວຽກ
ພາກສະໜອງການບໍລິການ (SERVICES)	ຈຳນວນ: 01 ວຽກ

3.2 ຄະນະກຳມະການ ສະສາງວັດຖຸອຸປະກອນ

ການດຳເນີນງານ ປະຈຳໄຕມາດ 3 ປີ 2026, ຄະນະກຳມະການສະສາງວັດຖຸອຸປະກອນ ໄດ້ດຳເນີນການ ຈັດກອງປະຊຸມເພື່ອສືບຕໍ່ປຶກສາຫາລືກ່ຽວກັບການສະສາງຊັບສົມບັດຄົງທີ່ ທີ່ໝົດອາຍຸການໃຊ້ງານ ແລະ ເປ່ເພ ປະຈາປີ 2025 ເພື່ອສະເໜີສະສາງອອກໃນປີ 2026.

3.3 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ

ການດຳເນີນງານ ປະຈຳໄຕມາດ 03 ປີ 2026 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ໄດ້ຈັດກອງປະຊຸມຂຶ້ນ 02 ຄັ້ງ, ໄດ້ຕົກລົງເຫັນດີ ແລະ ຮັບຮອງເອົາຂໍ້ກຳນົດ 06 ສະບັບ ດັ່ງນີ້:

1. ກຳນົດວ່າດ້ວຍການຄຸ້ມຄອງ, ການນຳໃຊ້ພາຫະນະຮັບໃຊ້ວຽກງານບໍລິຫານ, ການປະກອບນະໂຍບາຍພາຫະນະ, ເງິນອຸດໜູນພະຫະນະ ແລະ ການປະກອບນ້ຳມັນເຊື້ອໄຟໃຫ້ແກ່ພະນັກງານ;
2. ຂໍ້ກຳນົດວ່າດ້ວຍການກວດສອບພາຍໃນ;
3. ຂໍ້ກຳນົດວ່າດ້ວຍ ການຄຸ້ມຄອງ ແລະ ບໍລິຫານເອກະສານ E-office ຂອງ ຜ-ຟຟລ (ສະບັບປັບປຸງຄັ້ງທີ 1);
4. ຂໍ້ກຳນົດຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນວ່າດ້ວຍ ລະດັບຄວາມສາມາດທາງດ້ານວິຊາການ (ສະບັບປັບປຸງ ຄັ້ງທີ 5);
5. ຂໍ້ກຳນົດວ່າດ້ວຍກົດລະບຽບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຫ້ອງວາງສະແດງມູນເຊື້ອ ຂອງບັນດາເຂື່ອນໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງ;
6. ຂໍ້ກຳນົດວ່າດ້ວຍ ລະບຽບ ແລະ ນະໂຍບາຍຕໍ່ພະນັກງານ ແລະ ກຳມະກອນຜູ້ເຈັບເປັນ ຫຼື ເສຍຊີວິດ (ສະບັບປັບປຸງ ຄັ້ງທີ 4).

IV. ວຽກງານການເຄື່ອນໄຫວດ້ານສິ່ງແວດລ້ອມ ແລະ ຊຸມຊົນ

1. ນະໂຍບາຍດ້ານສິ່ງແວດລ້ອມ ແລະ ຊຸມຊົນ

- **ອີງຕາມ ນະໂຍບາຍສິ່ງແວດລ້ອມ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ສະບັບເລກທີ 1894/ ຜ-ຟຟລ, ລົງວັນທີ 12 ພຶດສະພາ 2026**

ຜ-ຟຟລ ໃຫ້ຄວາມສຳຄັນຂອງການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ ຄວບຄູ່ໄປກັບການຫຼຸດຜ່ອນຜົນກະທົບທາງລົບຕະຫຼອດ ເຖິງການພັດທະນາໂຄງການ, ການປະຕິບັດການ ແລະ ສ້ອມແປງບຳລຸງຮັກສາ, ການຮື້ຖອນໂຄງການ ລວມໄປເຖິງກິດຈະກຳທາງທຸລະກິດ, ວຽກງານການສະໜັບສະໜູນທີ່ກ່ຽວຂ້ອງ ການຈັດຊື້-ຈັດຈ້າງການຂົນສົ່ງ, ການຄຸ້ມຄອງ ຫຼືການເຂົ້າຊື້ກິດຈະການ ແລະ ການດຳເນີນການດ້ານການບໍລິຫານ; ເຊິ່ງ ຜ-ຟຟລ ໄດ້ສ້າງນະໂຍບາຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມນີ້ຂຶ້ນ ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດຕາມທິດທາງ ແລະ ເປົ້າໝາຍໃນການດຳເນີນທຸລະກິດຂອງບໍລິສັດ ຄວບຄູ່ກັບຄວາມຮັບຜິດຊອບທາງດ້ານສິ່ງແວດລ້ອມສັງຄົມດັ່ງນີ້:

- **ນະໂຍບາຍທາງດ້ານສິ່ງແວດລ້ອມ (Environmental)**

1. ກຳນົດໃຫ້ທຸກພາກສ່ວນມີການປະຕິບັດຕາມລະບຽບກົດໝາຍ ແລະ ມາດຕະຖານດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ ໂດຍຍຶດເອົາຫຼັກການຂອງອົງກອນສາກົນເປັນມາດຕະຖານແນວທາງການປະຕິບັດ.
2. ກຳນົດໃຫ້ທຸກເຂື່ອນຂອງ ຜ-ຟຟລ ຕ້ອງມີລະບົບຈັດການດ້ານສິ່ງແວດລ້ອມຢ່າງເປັນປະຈຳ (ການວາງແຜນ, ການປະຕິບັດ, ການກວດສອບ ແລະ ການປັບປຸງ).
3. ກຳນົດໃຫ້ມີການຄວບຄຸມຜົນກະທົບ ແລະ ປ້ອງກັນການເກີດມົນລະພິດຮອບດ້ານ ຈາກການດຳເນີນທຸລະກິດຂອງ ຜ-ຟຟລ ເຊັ່ນ: ການຄຸ້ມຄອງການປ່ອຍນ້ຳເສຍ, ວິທີການກຳຈັດນ້ຳມັນ, ການຖິ້ມຂີ້ເຫຍື້ອ ແລະ ກຳຈັດຂອງເສຍອັນຕະລາຍ, ການຫຼຸດຜ່ອນການປ່ອຍ CO2 ແລະ ການໃຊ້ພະລັງງານຢ່າງມີປະສິດທິພາບ.
4. ກຳນົດໃຫ້ມີການຄຸ້ມຄອງຄຸນນະພາບນ້ຳໃຫ້ຢູ່ໃນລະດັບມາດຕະຖານ ແລະ ກຳຈັດຕະກອນທີ່ຢູ່ໃນອ່າງເກັບນ້ຳ, ຮັກສາການປ່ອຍນ້ຳຂອງເຂື່ອນໃຫ້ຢູ່ໃນລະດັບມາດຕະຖານ ແລະ ປົກປ້ອງລະບົບນິເວດກໍຄືສັດນ້ຳ ແລະ ຊີວະນາໆພັນ.
5. ກຳນົດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການສ້າງອົງກອນໃຫ້ເປັນສີຂຽວ ໂດຍເນັ້ນໜັກການຫຼຸດຜ່ອນ Carbon footprint ໂດຍການປັບປຸງປະສິດທິພາບຂອງພະລັງງານ, ໃຊ້ພະລັງງານສະອາດ (Clean Energy), ຫັນເປັນດິຈິຕອລ, ຫຼຸດການໃຊ້ນ້ຳມັນ ໂດຍການຫັນມາໃຊ້ລົດໄຟຟ້າ (EV) ຫຼື ຫຼຸດຜ່ອນການເດີນທາງທີ່ບໍ່ຈຳເປັນ, ຄຸ້ມຄອງອ່າງນ້ຳ, ການຄັດແຍກຂີ້ເຫຍື້ອ (Reuse/Recycle), ການປູກປ່າຮອບເຂື່ອນ ແລະ ອື່ນໆ;
6. ສົ່ງເສີມໃຫ້ບໍລິສັດ ມີສ່ວນຮ່ວມໃນການຫຼຸດຜ່ອນພາວະໂລກຮ້ອນ ໂດຍການສະໜັບສະໜູນ ແລະ ນຳໃຊ້ມາດຕະການຫຼຸດກ໊າສເຮືອນແກ້ວຢ່າງເປັນຮູບປະທຳເຊັ່ນ: ການປັບປຸງປະສິດທິພາບການໃຊ້ພະລັງງານເຂື່ອນໄຟຟ້າ, ການຫຼຸດການນຳໃຊ້ນ້ຳມັນໃນການຂົນສົ່ງ, ການນຳໃຊ້ພະລັງງານສະອາດ ແລະ ການຈັດການອ່າງເກັບນ້ຳ (ເຊັ່ນ ການເພີ່ມເປີ່ອຍຂອງຊາກຕົ້ນໄມ້ໃນນ້ຳ).
7. ບໍລິສັດຈະດຳເນີນມາດຕະການປັບຕົວຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ (Climate Change) ເຊັ່ນ: ການຄຸ້ມຄອງນ້ຳໃນອ່າງໃຫ້ເໝາະສົມ, ການວາງແຜນຮັບມືໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ພ້ອມທັງຟື້ນຟູປ່າໄມ້ໃນເຂດອ່າງໂຕ່ງເພື່ອຊ່ວຍດູດຊຶມກາກບອນ (Carbon). ພະນັກງານທຸກຄົນຕ້ອງມີສ່ວນຮ່ວມໂດຍການນຳໃຊ້ພະລັງງານຢ່າງປະຢັດ, ຫຼຸດການໃຊ້ເຈ້ຍ, ປະຕິບັດວຽກແບບດິຈິຕອລ ແລະ ປະຕິບັດຕາມແນວທາງ ESG (Environmental, Social and Governance) ຂອງບໍລິສັດ ຢ່າງເຄັ່ງຄັດ ເພື່ອໃຫ້ການນຳເນີນງານມີຄວາມຍືນຍົງ ແລະ ມີສ່ວນຮ່ວມໃນການຫຼຸດຜ່ອນຜົນກະທົບຕໍ່ໂລກຢ່າງແທ້ຈິງ.
8. ກຳນົດໃຫ້ທຸກພາກສ່ວນໃນບໍລິສັດ ມີການບໍລິຫານ ໝູນໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດທິພາບ.

IV. ວຽກງານການເຄື່ອນໄຫວດ້ານສິ່ງແລດລ້ອມ ແລະ ຊຸມຊົນ

1. ນະໂຍບາຍດ້ານສິ່ງແວດລ້ອມ ແລະ ຊຸມຊົນ (ຕໍ່)

- **ນະໂຍບາຍດ້ານສັງຄົມ (Social)**

1. ກຳນົດໃຫ້ມີການສົ່ງເສີມໃນການພັດທະນາຊຸມຊົນໃນຂອບເຂດອ້ອມຂ້າງເຂື່ອນ ໃນການສ້າງອາຊີບ, ຝຶກອົບຮົມທັກສະອາຊີບໃຫ້ປະຊາຊົນ, ສະໜັບສະໜູນທາງດ້ານສາທາລະນະສຸກ ແລະ ການສຶກສາລວມເຖິງການພັດທະນາພື້ນຖານໂຄງລ່າງທີ່ ບໍລິສັດໄດ້ມີ ພັນທະຕໍ່ລັດຖະບານຕາມສັນຍາສຳປະທານ;
2. ການມີສ່ວນຮ່ວມກັບສັງຄົມ ຫຼື ຊຸມຊົນອ້ອມຂ້າງໂດຍຮັບຟັງຄຳຄິດເຫັນຂອງຊຸມຊົນ ແລະ ມີລະບົບຊ່ອງທາງໃຫ້ຊຸມຊົນສາມາດຮ້ອງທຸກ/ແຈ້ງບັນຫາເຖິງບໍລິສັດໄດ້, ຕ້ອງມີການເຜີຍແຜ່ອະທິບາຍຜົນກະທົບ ໃຫ້ຊຸມຊົນຮັບຮູ້ ແລະ ອອກຄວາມຄິດເຫັນກ່ອນ ຫຼື ລະຫວ່າງການຈະດຳເນີນໂຄງການໃດໜຶ່ງຂອງບໍລິສັດ.
3. ກຳນົດໃຫ້ມີການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບຂອງພະນັກງານ ລວມເຖິງຊຸມຊົນອ້ອມຂ້າງໂດຍຕ້ອງມີການຄວບຄຸມຄວາມປອດໄພ ຕາມມາດຕະຖານ, ການຝຶກຊ້ອມການອົບພະຍົບກໍລະນີເກີດເຫດສຸກເສີນ ແລະ ອຸປະຕິເຫດທີ່ເກີດຂຶ້ນ ໃນເວລາເຮັດວຽກ.
4. ກຳນົດໃຫ້ມີການສ້າງກົດຈະກຳຢ່າງເປັນປະຈຳ ຮ່ວມກັບຊຸມຊົນ ຂອບເຂດເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ແລະ/ຫຼື ຂອບເຂດບ້ານທຸກຍາກ ແລະ ສະຖານທີ່ອື່ນໆ ຕາມຄວາມເໝາະສົມໂດຍສຸມໃສ່ການສ້າງຜົນປະໂຫຍດໃຫ້ແກ່ສັງຄົມເຊັ່ນ: ການສ້າງໂຄງການບໍລິຈາກເຄື່ອງ, ການສົ່ງເສີມການສຶກສາ ແລະ ກິດຈະກຳພັດທະນາຊຸມຊົນອື່ນໆ.
5. ກຳນົດໃຫ້ຜູ້ຮັບເໝົາຕ້ອງປະຕິບັດຕາມນະໂຍບາຍຂອງບໍລິສັດ ໂດຍຄຳນຶງເຖິງການປົກປ້ອງສິ່ງແວດລ້ອມການຮັບຜິດຊອບຕໍ່ສັງຄົມ ແລະ ປະຕິບັດວຽກງານຢ່າງໂປ່ງໃສ ຖືກຕ້ອງຕາມກົດໝາຍ ແລະ ບໍ່ໃຊ້ແຮງງານແບບຜິດກົດໝາຍ.

ຜ-ຟຟລ ຈະມີການດຳເນີນການທົບທວນ ແລະ ປັບປຸງ ນະໂຍບາຍສິ່ງແວດລ້ອມ ແລະ ສັງຄົມ ເປັນແຕ່ລະໄລຍະ ເພື່ອໃຫ້ແທດເໝາະກັບ ລະບຽບກົດໝາຍ ຂອງ ສປປ ລາວ, ສະພາບການດຳເນີນທຸລະກິດ ແລະ ມາດຕະຖານສາກົນ.

2. ວຽກງານທີ່ຕິດພັນກັບສິ່ງແວດລ້ອມ ແລະ ຊຸມຊົນ

ໃນໄຕມາດ 03 ປີ 2026, ຜ-ຟຟລ ໄດ້ນຳໃຊ້ງົບປະມານ ຈຳນວນປະມານ 589,727,000 ກີບ ເຂົ້າໃນການດຳເນີນວຽກງານສິ່ງແວດລ້ອມ ແລະ ຊຸມຊົນ ຂອງບໍລິສັດ ໂດຍອີງຕາມແຜນການຈັດຕັ້ງປະຕິບັດວຽກງານ ໃນການຕິດຕາມ, ຊ່ວຍເຫຼືອບັນດາບ້ານ ທີ່ຢູ່ອ້ອມຂ້າງເຂື່ອນ, ການປະຕິບັດ ພັນທະທາງດ້ານສິ່ງແວດລ້ອມ ແລະ ພັນທະຕາມສັນຍາສຳປະທານ. ຜ-ຟຟລ ໄດ້ຈັດຕັ້ງປະຕິບັດວຽກງານປູກຈິກສຳນຶກໃຫ້ແກ່ຊຸມຊົນ ແລະ ໃຫ້ການຊ່ວຍເຫຼືອ ໃນການສ້ອມແປງຫຼັງຄາ ຂອງໂຮງຮຽນບ້ານ ວັງເຮືອ ແລະ ໂຮງຮຽນບ້ານ ປ່າແປກ, ເມືອງທຸລະຄົມ, ແຂວງ ວຽງຈັນ ເຊິ່ງ ເປັນຊຸມຊົນອ້ອມຂ້າງເຂື່ອນໄຟຟ້ານ້ຳມັງ 3, ພ້ອມກັນນັ້ນ, ຜ-ຟຟລ ໄດ້ມອບພັດລົມແຂວນຝາ, ພັດລົມແຂວນເພດານ ແລະ ຄອມພິວເຕີ ຈຳນວນໜຶ່ງ ໃຫ້ແກ່ໂຮງຮຽນ ມັດທະຍົມຕອນຕົ້ນສີສັດຕະນາກ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ລົງຕິດຕາມການນຳໃຊ້ທຶນພັດທະນາຊຸມຊົນ (CA) ຮ່ວມກັນ ກົມຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນການມອບ-ຮັບ ຕາຂ່າຍແຮງດັນສູງກາງ 22Kv ຕາມເສັ້ນທາງ 516 ຄວາມຍາວ 5.9 Km ຂອງ ເມືອງລອງຊານ, ແຂວງໄຊສົມບູນ ແລະ ວຽກກໍ່ສ້າງທາງດິນແດງ ແລະ ກໍ່ສ້າງທາງເບຕົ້ງ ທີ່ບ້ານ ແຊລະບຳ, ເມືອງ ຊະນະສົມບູນ, ແຂວງ ຈຳປາສັກ. ນອກນັ້ນ, ຜ-ຟຟລ ຍັງໄດ້ເອົາໃຈໃສ່ໃນການລົງຕິດຕາມ, ສ້ອມແປງ ແລະ ບຳລຸງຮັກສາ ລະບົບໂທລະໂຄ່ງ ໃຫ້ແກ່ບັນດາບ້ານຢູ່ເຂດລຸ່ມເຂື່ອນໄຟຟ້ານ້ຳງື່ມ 1 ແລະ ເຂື່ອນໄຟຟ້ານ້ຳມັງ 3, ສືບຕໍ່ ຈັດຕັ້ງປະຕິບັດໂຄງການ 1 ເຂື່ອນ 1 ຜະລິດຕະພັນ ຂອງບັນດາເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ.

ສະຫຼຸບລວມແລ້ວ, ໃນໄຕມາດ 3 ປີ 2026 ນີ້, ຜ-ຟຟລ ເນັ້ນໃສ່ການຈັດຕັ້ງປະຕິບັດ ບັນດາພັນທະສິ່ງແວດລ້ອມ ແລະ ພັນທະຕາມສັນຍາສຳປະທານ, ໃຫ້ການຊ່ວຍເຫຼືອ ແລະ ໃຫ້ຄວາມຮູ້ໃນດ້ານຕ່າງໆແກ່ຊຸມຊົນ ເປັນຫຼັກ. ຜ-ຟຟລ ຍັງຈະສືບຕໍ່ ໃຫ້ຄວາມສຳຄັນທາງດ້ານ ສິ່ງແວດລ້ອມ ດ້ວຍຄວາມຮັບຜິດຊອບສູງ ແລະ ໃນການສະໜັບສະໜູນ ໃນດ້ານການມີສ່ວນຮ່ວມຕໍ່ສັງຄົມ ຕໍ່ໄປ.

V. ການດຳເນີນທຸລະກິດ ແລະ ຜົນການດຳເນີນທຸລະກິດ

ນັບແຕ່ປີ 2010 ເຖິງປັດຈຸບັນ, ຜ-ຟຟລ ໄດ້ດຳເນີນທຸລະກິດ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ລັດ ວິສາຫະກິດໄຟຟ້າລາວ (ຟຟລ), ຜ-ຟຟລ ໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງໃນແຕ່ລະໄລຍະ ກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເພື່ອຮອງ ຮັບການຂະຫຍາຍຕົວຂອງວຽກງານ, ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ຜ່ານການ ຈັດຕັ້ງປະຕິບັດ ຜົນການດຳເນີນທຸລະກິດປະຈຳ ໄຕມາດ 3 ປີ 2026 ສາມາດສັງລວມໄດ້ດັ່ງນີ້:


1. ການຜະລິດພະລັງງານໄຟຟ້າ

ໃນໄຕມາດ 3 ປີ 2026, ແຜນການຜະລິດທົ່ວ ຜ-ຟຟລ ແມ່ນເທົ່າກັບ 2,201.96 GWh, ປະຕິບັດຕົວຈິງໄດ້ 2,283.78 GWh ເທົ່າກັບ 103.72 % ຂອງແຜນການ, ທຽບໃສ່ໄລຍະດຽວກັນ ຂອງປີຜ່ານມາ ປະຕິບັດໄດ້ 87.99 %.

ສຳລັບການຜະລິດຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ 100% (10 ເຂື່ອນ) ແມ່ນສາມາດປະຕິບັດໄດ້ 823.40 GWh ຫລຸດແຜນການ 10.13%, ສາເຫດທີ່ຫລຸດແຜນການ ແມ່ນເນື່ອງມາຈາກ ປະລິມານນ້ຳໄຫຼເຂົ້າອ່າງຂອງເຂື່ອນໄຟຟ້າ ທີ່ ຜ-ຟຟລ ຄຸ້ມຄອງ ເອງ ຫຼຸດແຜນການ ເຊັ່ນ: ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້ານ້ຳສະນາ ແລະ ເຂື່ອນໄຟຟ້ານ້ຳງື່ມ 1.

ຕາຕະລາງ 1: ການຜະລິດພະລັງງານໄຟຟ້າປະຈຳ ໄຕມາດ 3 ປີ 2026

ລາຍລະອຽດ	ໄຕມາດ 3 ປີ 2026			ໄຕມາດ 3 ປີ 2025	
	ປະຕິບັດໄດ້ຕົວຈິງ	ແຜນການ	ທຽບແຜນການ	ປະຕິບັດໄດ້ຕົວຈິງ	ທຽບເປັນ
	GWh	GWh	%	GWh	%
ເຂື່ອນ ຜ-ຟຟລ ຄຸ້ມຄອງ	823.40	916.18	89.87%	1,003.05	82.09%
ໂຄງການ IPPs	1,460.38	1,285.78	113.58%	1,592.46	91.71%
ລວມ	2,283.78	2,201.96	103.72%	2,595.51	87.99%




V. ການດຳເນີນທຸລະກິດ ແລະ ຜົນການດຳເນີນທຸລະກິດ

2. ລາຍຮັບ

ໃນໄຕມາດ 03 ປີ 2026, ຜ-ຟຟລ ມີລາຍຮັບ ລວມທັງໝົດຈຳນວນ 1,781,623 ລ້ານກີບ ຫຼຸດລົງ 33.96% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຫຼັກ ແມ່ນເນື່ອງມາຈາກ ການຜະລິດກະແສໄຟຟ້າຫຼຸດລົງ ເຮັດລາຍການຮັບດັ່ງກ່າວຫຼຸດລົງເຊັ່ນກັນ. (ຕາຕະລາງ 2)


ໂຄງສ້າງລາຍຮັບ ປະຈຳໄຕມາດ 03 ປີ 2026



3. ລາຍຈ່າຍ

ໃນໄຕມາດ 03 ປີ 2026, ຜ-ຟຟລ ມີລາຍຈ່າຍ ລວມທັງໝົດຈຳນວນ 3,275,265 ລ້ານກີບ ເພີ່ມຂຶ້ນ 296.38% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຫຼັກ ແມ່ນເນື່ອງມາຈາກ ອັດຕາແລກປ່ຽນທີ່ຍັງບໍ່ທັນເກີດຂຶ້ນຈິງ ມາຮັບຮູ້ເປັນຂາດທຶນຈາກອັດຕາແລກປ່ຽນຕາມການຊຳລະຕົວຈິງ ແລະ ການເພີ່ມຂຶ້ນຂອງການຫັກຄ່າຫຼ້ຍຫ້ຽນ ທີ່ໄດ້ມາຈາກການຮັບຮູ້ ມູນຄ່າໃໝ່ ຈາກການຕີມູນຄ່າຊັບສິນ. (ຕາຕະລາງ 2)

ໂຄງສ້າງລາຍຈ່າຍ ປະຈຳ ໄຕມາດ 03 ປີ 2026



V. ການດຳເນີນທຸລະກິດ ແລະ ຜົນການດຳເນີນທຸລະກິດ

4. ກຳໄລ/(ຂາດທຶນ)ສຸດທິໃນການດຳເນີນທຸລະກິດ

ຜົນການດຳເນີນທຸລະກິດຂອງ ຜ-ຟຟລ ໃນ ໄຕມາດ 03 ປີ 2026 ແມ່ນ ຂາດທຶນສຸດທິ (1,493,642) ລ້ານກີບ (ຕາຕະລາງ 2).

ຕາຕະລາງ 2 : ລາຍຮັບ, ລາຍຈ່າຍ ແລະ ກຳໄລ(ຂາດທຶນ) ປະຈຳ ໄຕມາດ 03 ປີ 2026

ໜ່ວຍ: ລ້ານກີບ

ລ/ດ	ເນື້ອໃນ	ໄຕມາດ 03 ປີ 2026	ໄຕມາດ 03 ປີ 2025	ຈຳນວນປ່ຽນແປງ	ທຽບໃສ່ ໄຕມາດ 03 ປີ 2025 ເປັນ (%)
		1	2	3=1-2	4=3/2
I	**ລາຍຮັບລວມ**	**1,781,623**	**2,697,934**	**(916,311)**	**(33.96)%**
1	ລາຍຮັບຈາກການຂາຍກະແສໄຟ	852,980	1,002,281	(149,301)	(14.90)%
2	ລາຍຮັບອື່ນໆ	33,056	900,578	(867,522)	(96.33)%
3	ສ່ວນແບ່ງກຳໄລຈາກການລົງທຶນໃນວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ	895,587	795,075	100,512	12.64%
II	**ລາຍຈ່າຍລວມ**	**3,275,265**	**826,299**	**2,448,966**	**296.38%**
1	ລາຍຈ່າຍຕົ້ນທຶນການຂາຍ ແລະ ການບໍລິການ	401,501	359,152	42,349	11.79%
2	ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	81,811	82,862	(1,051)	(1.27)%
3	ຕົ້ນທຶນທາງການເງິນ	361,872	361,770	102	0.03%
4	ຂາດທຶນຈາກອັດຕາແລກປ່ຽນ	2,430,081	22,465	2,407,616	10717.19%
5	ລາຍຈ່າຍອາກອນກຳໄລ	0	50	(50)	(100)%
ກຳໄລ/(ຂາດທຶນ) ສຸດທິ		**(1,493,642)**	**1,871,635**	**(3,365,277)**	**(179.80)%**

ໝາຍເຫດ: ອີງຕາມໃບລາຍງານການເງິນແບບລວມ

V. ການດຳເນີນທຸລະກິດ ແລະ ຜົນການດຳເນີນທຸລະກິດ


5. ການມອບພັນທະໃຫ້ລັດ

ຜ-ຟຟລ ແມ່ນບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນ ບໍລິສັດໜຶ່ງທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປ ລາວ; ສະນັ້ນ ການມອບພັນທະກໍ່ເປັນອີກວຽກໜຶ່ງ ທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ, ໃນ ໄຕມາດ 03 ປີ 2026 ຜ-ຟຟລ ໄດ້ມອບພັນທະໃຫ້ແກ່ລັດຖະບານ ລວມມູນຄ່າທັງໝົດ 8,586 ລ້ານກີບ, ເຊິ່ງປະກອບດ້ວຍອາກອນເງິນເດືອນ/ເບ້ຍປະຊຸມ, ຄ່າພາກຫຼວງ, ອາກອນມູນ ຄ່າເພີ່ມ ແລະ ອາກອນຫັກໄວ້ເອລາຈ່າຍ. (ຕາຕະລາງ 3)

ຕາຕະລາງ 3 : ການມອບພັນທະໃຫ້ແກ່ລັດຖະບານ ປະຈຳ ໄຕມາດ 03 ປີ 2026

ລາຍການລະອຽດ (ໜ່ວຍ: ລ້ານກີບ)	ຈຳນວນ	ທຽບໄຕມາດ 03 ປີ 2025 (%)
ອາກອນເງິນເດືອນ / ເບ້ຍປະຊຸມ	3,271	6.83%
ຄ່າພາກຫຼວງ	5,179	(28.96)%
ອາກອນມູນຄ່າເພີ່ມ	132	(61.74)%
ອາກອນຫັກໄວ້ເອລາຈ່າຍ	4	(97.22)%
ລວມທັງໝົດ	8,586	(20.80)%

ສັດສ່ວນການມອບພັນທະອາກອນ ປະຈຳໄຕມາດ 03 ປີ 2026



V. ການດຳເນີນທຸລະກິດ ແລະ ຜົນການດຳເນີນທຸລະກິດ

6. ການຊື້-ຂາຍຮຸ້ນ ຂອງ ຜ-ຟຟລ ຢູ່ໃນຕະຫຼາດຫຼັກຊັບ

ຮອດທ້າຍເດືອນ ກັນຍາ 2026, ບໍລິສັດ ຈົດທະບຽນມີທັງໝົດ 11 ບໍລິສັດ ແລະ ມີມູນຄ່າຕະຫຼາດລວມກັນທັງໝົດ ໃນຕະຫຼາດຫຼັກຊັບລາວ (Market Capitalization) ແມ່ນເທົ່າກັບ 26,237,689.26 ລ້ານກີບ, ສຳລັບ ຜ-ຟຟລ ແມ່ນກວມເອົາ 24.07% ຢູ່ອັນດັບທີ 1 ຂອງບໍລິສັດທີ່ມີມູນຄ່າຕະຫຼາດສູງທີ່ສຸດໃນຕະຫຼາດຫຼັກຊັບລາວ.

ສຳລັບຮຸ້ນຂອງ ຜ-ຟຟລ ໃນໄຕມາດ 03 ປີ 2026 (ເດືອນກໍລະກົດ - ກັນຍາ) ມູນຄ່າການຊື້-ຂາຍ (Trading Value) ແມ່ນເທົ່າກັບ 26,734,883,000 ກີບ, ມີຈຳນວນການຊື້-ຂາຍ (Trading Volume) ແມ່ນເທົ່າກັບ 8.3 ລ້ານຮຸ້ນ, ລາຄາຮຸ້ນມີການເໜັງຕີງສູງສຸດເທົ່າ 4,190 ກີບ/ຮຸ້ນ ແລະ ຕ່ຳສຸດ 2,340 ກີບ/ຮຸ້ນ, ລາຄາຮຸ້ນວັນທີ 01/07/2026 ແມ່ນ 2,380 ກີບຕໍ່ຮຸ້ນ ມາຮອດ ວັນທີ 30 ກັນຍາ 2026 ແມ່ນເທົ່າກັບ 3,760 ກີບຕໍ່ຮຸ້ນ ເພີ່ມຂຶ້ນ ປະມານ 58%.

ປະຫວັດການຊື້-ຂາຍຮຸ້ນ ຂອງ ຜ-ຟຟລ ໃນລະຫວ່າງ ວັນທີ 01/07/2026 ຮອດວັນທີ 30/09/2026



ຂໍ້ມູນຈາກເວັບໄຊ ຕະຫຼາດຫຼັກຊັບລາວ

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດາວວົງ ສຸບັນທະລາດ
ສ.ຜ ຜູ້ອຳນວຍການໃຫຍ່